ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ
Lao Culture Tourism Public Group Company

ເລກທີ...224.../ບທວລ

ນະຄອນຫຼວງວຽງຈັນ, ວັນທີ...14 NOV 2025...

ຮຽນ : ທ່ານ ຜູ້ຖືຮຸ້ນຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ເລື່ອງ : ເຊີນເຂົ້າຮ່ວມກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1 ປະຈຳປີ 2025

- ອີງຕາມການຕົກລົງເຫັນດີຂອງກອງປະຊຸມສະພາບໍລິຫານຄັ້ງວັນທີ 24/10/2025.
- ອີງຕາມບັນຊີທະບຽນຜູ້ຖືຮຸ້ນຈາກສຳນັກງານຕະຫຼາດຫຼັກຊັບລາວ.

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ຂໍຖືເປັນກຽດຮຽນເຊີນທ່ານ ຜູ້ຖືຮຸ້ນຂອງ ບໍລິສັດ ບທວລ ເຂົ້າຮ່ວມກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1 ປະຈຳປີ 2025 ໃນວັນທີ 23/12/2025 ເວລາ 09:00 ໂມງ ,ເລີ່ມລົງທະບຽນເວລາ 8:30 -09:00 ໂມງ, ທີ່ຫ້ອງປະຊຸມໃຫ່ຍຊັ້ນ 4 ສຳນັກງານໃຫ່ຍ ຂອງບໍລິສັດ ລັດວິສາຫະກິດ ພັດທະນາກະສິກຳ-ອຸດສາຫະກຳ ບໍລິການ ແລະການຄ້າ ຂາອອກ - ຂາເຂົ້າ (ພກອ) ບ້ານສີໄຄທົ່ງ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ ສປປລາວ ເພື່ອພິຈາລະນາ ແລະຮັບຮອງເອົາມະຕິຕ່າງໆ ຕາມວາລະກອງປະຊຸມທີ່ຄັດຕິດມາພ້ອມນີ້.

ບໍລິສັດ ບທວລ ໄດ້ແຈ້ງໃຫ້ຕະຫຼາດຫຼັກຊັບລາວ ໃນການກຳນົດເອົາວັນທີ 12/11/2025 ເປັນມື້ປິດປຶ້ມ ບັນຊີທະບຽນຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1 ປະຈຳປີ 2025 ສະນັ້ນ, ບໍລິສັດ ບທວລ ຈຶ່ງຖືເອົາຕາມບັນຊີທະບຽນຜູ້ຖືຮຸ້ນ ຈາກບໍລິສັດ ຕະຫຼາດຫຼັກຊັບລາວ ເພື່ອກຳນົດສິດດັ່ງກ່າວຂອງຜູ້ຖືຮຸ້ນ.

ຜູ້ຖືຮຸ້ນແຕ່ລະທ່ານ ຈະຕ້ອງໄດ້ເອົາໜັງສືເຊີນປະຊຸມທີ່ລະບຸສິດຂອງທ່ານ ເຂົ້າໃນການເຂົ້າຮ່ວມກອງປະຊຸມ (ມີລະຫັດບາໂຄດ) ພ້ອມເອກະສານຄັດຕິດຕ່າງໆຢູ່ຕະຫຼາດຫຼັກຊັບລາວ ເພື່ອແຈ້ງລົງທະບຽນເຂົ້າຮ່ວມກອງປະຊຸມ.

ຫວັງຢ່າງຍິ່ງວ່າ ທ່ານຄົງສະຫຼະເວລາອັນມີຄ່າເຂົ້າຮ່ວມກອງປະຊຸມຄັ້ງນີ້ດ້ວຍ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ.

ປະທານສະພາບໍລິຫານ ບໍລິສັດ

ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳ ລາວ ມະຫາຊົນ Lao Culture Tourism Public Group Company

ເນ້ຍເຫຼ້ຍ

ໜັງສືເຊີນປະຊຸມວິສາມັນຜູ້ຖືຮຸ້ນ

ຄັ້ງທີ 1 ປະຈຳປີ 2025

ຂອງ ກຸ່ມບໍລິສັດ ທ່ອງທ່ຽວ ອັດທະນະທຳ ລາວ ມະຫາຊົນ

ວັນອັງຄານ, ທີ 23 ທັນວາ 2025

ເວລາ 9:00 ໂມງ

ຢູ່ທີ່ ຫ້ອງປະຊຸມໃຫ່ຍ ຊັ້ນ 4

ບ້ານ ສີໄຄທົ່ງ, ເມືອງສີໂຄດຕະບອງ

ນະຄອນຫຼວງວຽງຈັນ, ສປປລາວ

ເອກະສານຄັດຕິດ :

1. ວາລະກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1 ປີ 2025.
2. ການສະເໜີສືບຕໍ່ຮັກສາສະຖານະການເປັນບໍລິສັດຈົດທະບຽນ.
3. ແຜນການດຳເນີນທຸລະກິດຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳ ລາວ ມະຫາຊົນ ປີ 2026 - 2028.
4. ການປ່ຽນຜູ້ອຳນວຍການໃຫຍ່ຂອງບໍລິສັດ.
5. ການປ່ຽນສະມາຊິກສະພາບໍລິຫານຂອງບໍລິສັດ.
6. ແບບຟອມໃບມອບສິດ.
7. ແຜນທີ່ຕັ້ງຂອງກອງປະຊຸມສາມັນຜູ້ຖືຮຸ້ນ

ໝາຍເຫດ :

1. ຜູ້ຖືຮຸ້ນທຸກໆທ່ານຕ້ອງໄປຮັບເອົາໜັງສືເຊີນປະຊຸມພ້ອມເອກະສານຄັດຕິດຕ່າງໆເລີ່ມແຕ່ວັນທີ 17/11/2025 ຢູ່ຕະຫຼາດຫຼັກຊັບ ຊັ້ນ 4, ພະແນກຊຳລະສະສາງ ແລະ ຮັບຝາກຫຼັກຊັບ ບ້ານໂພນທັນ ເໜືອ, ຖະໜົນ T4, ເມືອງໄຊເສດຖາ, ນະຄອນຫລວງວຽງຈັນ ໂທລະສັບ (856-21) 454361, ແຟັກ (856-21) 454361-4.
2. ສຳລັບຜູ້ຖືຮຸ້ນທີ່ເຂົ້າຮ່ວມປະຊຸມດວ້ຍຕົນເອງກະລຸນານຳບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນຄົນຕ່າງປະເທດ) ມາໃນວັນປະຊຸມ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມ.
3. ສຳລັບຜູ້ຖືຮຸ້ນທີ່ຈະໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະລົງລາຍເຊັນໃນໃບມອບສັນທະຕາມ <u>ເອກະສານຄັດຕິດ 6</u> ທີ່ໄດ້ຄັດຕິດມາພ້ອມນີ້ໃຫ້ຖືກຕ້ອງຄົບຖ້ວນ.
4. ສຳລັບຜູ້ຕາງໜ້າທີ່ຈະເຂົ້າຮ່ວມກອງປະຊຸມຈະຕ້ອງນຳເອກະສານ ຫຼື ຫຼັກຖານ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມຕາມລາຍລະອຽດທີ່ໄດ້ລະບຸໄວ້ໃນນີ້ ແລະສົ່ງມອບໃຫ້ປະທານກອງປະຊຸມ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍຈາກປະທານ, ຜູ້ຕາງໜ້າຈຶ່ງເຂົ້າຮ່ວມກອງປະຊຸມໄດ້,
5. ໃນກໍລະນີທີ່ຜູ້ຖືຮຸ້ນຈະມອບໝາຍໃຫ້ຜູ້ອຳນວຍການ ຂອງບໍລິສັດ ເຂົ້າຮ່ວມກອງປະຊຸມ ແລະລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະລົງລາຍເຊັນໃນໃບມອບສັນທະ ແລະໝາຍ (✓) ເພື່ອເລືອກເອົາຜູ້ອຳນວຍການ ຂອງບໍລິສັດທ່ານໃດທ່ານໜຶ່ງເປັນຜູ້ຕາງໜ້າ ແລະ ສົ່ງໃບມອບສັນທະດັ່ງກ່າວ ພ້ອມເອກະສານປະກອບສົ່ງເຖິງ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ຊັ້ນ 2, ພະແນກເລຂານຸການ ບໍລິສັດ, ບ້ານ ໜອງບອນ, ເມືອງໄຊເສດຖາ ນະຄອນຫລວງວຽງຈັນ ສປປລາວ, ຕູ້ ປ.ນ 6821 ແລະກະລຸນາສົ່ງເຖິງບໍລິສັດ ກ່ອນວັນທີ 23/12/2025.
6. ຖ້າຫາກທ່ານມີຂໍ້ສົງໄສ ຫຼື ຄຳຖາມກ່ຽວກັບການມອບສັນທະ, ກະລຸນາສອບຖາມ ທ່ານ ນາງ ຄຳມີ (856-20) 55966610 ໃນໂມງລັດຖະການ.

ຄຳແນະນຳກ່ຽວກັບການລົງຄະແນນສຽງ

1. ຜູ້ເຂົ້າຮ່ວມກອງປະຊຸມ ຈະໄດ້ຮັບບັດລົງຄະແນນສຽງໃນທຸກໆວາລະ ທີ່ຕ້ອງການໃຫ້ມີການລົງຄະແນນສຽງ ໃນເວລາລົງທະບຽນເຂົ້າຮ່ວມກອງປະຊຸມ. ການລົງຄະແນນສຽງໂດຍຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນເປັນຜູ້ມອບໝາຍສິດໄດ້ລະບຸຢ່າງຈະແຈ້ງແລ້ວກ່ຽວກັບການລົງຄະແນນໃນແຕ່ລະວາລະ ບໍລິສັດ ຊີມັງລາວ ມະຫາຊົນຈະບັນທຶກການລົງຄະແນນສຽງໃນເວລາລົງທະບຽນ ໂດຍທີ່ຜູ້ຕາງໜ້າຈະບໍ່ຕ້ອງລົງຄະແນນສຽງອີກ
2. ກອງປະຊຸມ ຈະເຊີນພຽງແຕ່ຜູ້ຖືຮຸ້ນທ່ານໃດທີ່ ບໍ່ເຫັນດີ ຕໍ່ບັນຫາທີ່ກອງປະຊຸມໄດ້ນຳສະເໜີເທົ່ານັ້ນ ລົງຄະແນນສຽງ (ໝາຍຄວາມວ່າຜູ້ຖືຮຸ້ນທ່ານໃດທີ່ເຫັນດີຕໍ່ການແຕ່ງຕັ້ງດັ່ງກ່າວ ກໍ່ບໍ່ຈຳເປັນຕ້ອງລົງຄະແນນສຽງໃດໆ).
3. ໃນການລົງຄະແນນສຽງຂໍໃຫ້ທ່ານປະກອບຂໍ້ມູນໃສ່ບັດລົງຄະແນນສຽງທີ່ໄດ້ແຈກຢາຍໃຫ້, ໃນນັ້ນ ຕ້ອງລະບຸຢ່າງຈະແຈ້ງກ່ຽວກັບຊື່ ແລະ ນາມສະກຸນຂອງທ່ານ, ຈຳນວນຮຸ້ນຂອງ ບໍລິສັດ ຊີມັງລາວ ມະຫາຊົນ ທີ່ທ່ານຖືຢູ່ ແລະໃຫ້ໝາຍຕີນກາໃສ່ຫ້ອງບໍ່ເຫັນດີ.
4. ຫຼັງຈາກປະກອບຂໍ້ມູນຮຽບຮ້ອຍແລ້ວ ຂໍໃຫ້ທ່ານຍົກບັດດັ່ງກ່າວຂຶ້ນ ເພື່ອໃຫ້ຄະນະຮັບຜິດຊອບເກັບເອົາ ແລະຮວບລວມຄະແນນສຽງ.
5. ທ່ານຈະໄດ້ຮັບແຈ້ງກ່ຽວກັບຜົນການນັບຄະແນນຢູ່ໃນທີ່ປະຊຸມເລີຍໂດຍການນັບຄະແນນສຽງຈະຖືເອົາໜຶ່ງຮຸ້ນເທົ່າກັບໜຶ່ງຄະແນນສຽງ.
6. ການລົງຄະແນນສຽງບໍ່ເຫັນດີຈະມີຜົນສັກສິດກໍ່ຕໍ່ເມື່ອມີຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງ ຈຳນວນຮຸ້ນຂອງບໍລິສັດ ຊີມັງລາວ ມະຫາຊົນ ທັງໃນທີ່ປະຊຸມ ດັ່ງທີ່ໄດ້ກຳນົດໄວ້ໃນມາດຕາ 143 ຂອງກົດໝາຍວ່າດ້ວຍວິສາຫະກິດ.

ເອກະສານຄັດຕິດ: 01

<u>ວາລະຂອງກອງປະຊຸມ</u>
<u>ວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2025</u>

• **ວາລະທີ 01** : ພິຈາລະນາ ແລະຮັບຮອງ ການສະເໜີສືບຕໍ່ຮັກສາສະຖານະການເປັນບໍລິສັດຈົດ ທະບຽນ.

ລາຍລະອຽດ :

ການສະເໜີສືບຕໍ່ຮັກສາສະຖານະການເປັນບໍລິສັດຈົດທະບຽນທີ່ໄດ້ລາຍງານໃນກອງປະຊຸມສະພາບໍລິ ຫານ ໃນວັນທີ 24/10/2025 ເຊິ່ງມີເນື້ອໃນລາຍລະອຽດໃນເອກະສານຄັດຕິດ 02 ທີ່ໄດ້ຄັດຕິດມາ ພ້ອມນີ້.

ຄຳເຫັນຂອງສະພາບໍລິຫານ :
ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວຈຶ່ງເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງ ເອົາ ພິຈາລະນາຮັບຮອງການສະເໜີສືບຕໍ່ຮັກສາສະຖານະການເປັນບໍລິສັດຈົດທະບຽນ.

ຄະແນນສຽງທີ່ຕ້ອງໃຊ້ :
ອີງຕາມກົດໝາຍວ່າດວ້ຍວິສາຫະກິດທີ່ໄດ້ກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດວ້ຍຄະແນນສຽງຫລາຍ ກວ່າເຄິ່ງນຶ່ງຂອງຄະແນນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 02: ພິຈາລະນາ ແລະຮັບຮອງ ແຜນການດຳເນີນທຸລະກິດຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະ ນະທຳ ລາວ ມະຫາຊົນ ປີ 2026 - 2028.

ລາຍລະອຽດ :

ແຜນການດຳເນີນທຸລະກິດຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳ ລາວ ມະຫາຊົນ ປີ 2026 - 2028.

ທີ່ໄດ້ລາຍງານໃນກອງປະຊຸມສະພາບໍລິຫານ ໃນວັນ 24/10/2025 ເຊິ່ງມີເນື້ອໃນລາຍລະອຽດໃນເອກະ ສານຄັດຕິດ 03.

ຄຳເຫັນຂອງສະພາບໍລິຫານ :

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວຈຶ່ງເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງ ເອົາ ແຜນການດຳເນີນທຸລະກິດຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳ ລາວ ມະຫາຊົນ ປີ 2026 - 2028.

ຄະແນນສຽງທີ່ຕ້ອງໃຊ້ :
ອີງຕາມກົດໝາຍວ່າດວ້ຍວິສາຫະກິດທີ່ໄດ້ກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດວ້ຍຄະແນນສຽງຫລາຍ ກວ່າເຄິ່ງນຶ່ງຂອງຄະແນນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 03 : ພິຈາລະນາ ແລະຮັບຮອງ ການປ່ຽນຜູ້ອຳນວຍການໃຫຍ່ຂອງບໍລິສັດ.

ລາຍລະອຽດ :

ການປ່ຽນຜູ້ອຳນວຍການໃຫຍ່ຂອງບໍລິສັດ ທີ່ໄດ້ມີການລາຍງານຕໍ່ກອງປະຊຸມສະພາບໍລິຫານ ຄັ້ງວັນທີ 24/10/2025 ເຊິ່ງມີເນື້ອໃນລາຍລະອຽດໃນເອກະສານຄັດຕິດ 04 ທີ່ໄດ້ຄັດຕິດມາພ້ອມນີ້.

ຄຳເຫັນຂອງສະພາບໍລິຫານ :

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວຈຶ່ງເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງເອົາ ການປ່ຽນຜູ້ອຳນວຍການໃຫຍ່ຂອງບໍລິສັດ.

ຄະແນນສຽງທີ່ຕ້ອງໃຊ້ :

ອີງຕາມກົດໝາຍວ່າດວ້ຍວິສາຫະກິດທີ່ໄດ້ກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດວ້ຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຄະແນນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 04 : ພິຈາລະນາ ແລະ ຮັບຮອງ ການປ່ຽນສະມາຊິກສະພາບໍລິຫານຂອງບໍລິສັດ.

ລາຍລະອຽດ :

ການປ່ຽນສະມາຊິກສະພາບໍລິຫານຂອງບໍລິສັດ. ທີ່ໄດ້ລາຍງານໃນກອງປະຊຸມສະພາບໍລິຫານ ໃນວັນທີ 24/10/2025 ເຊິ່ງມີເນື້ອໃນລາຍລະອຽດໃນເອກະສານຄັດຕິດ 05.

ຄຳເຫັນຂອງສະພາບໍລິຫານ :

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວຈຶ່ງເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງເອົາການປ່ຽນສະມາຊິກສະພາບໍລິຫານຂອງບໍລິສັດ.

ຄະແນນສຽງທີ່ຕ້ອງໃຊ້ :

ອີງຕາມກົດໝາຍວ່າດວ້ຍວິສາຫະກິດທີ່ໄດ້ກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດວ້ຍຄະແນນສຽງຫລາຍກວ່າເຄິ່ງນຶ່ງຂອງຄະແນນສຽງທີ່ເຂົ້າຮ່ວມກອງປະຊຸມ.

ເອກະສານຄັດຕິດ 02 :

ການສະເໜີສືບຕໍ່ຮັກສາສະຖານະການເປັນບໍລິສັດຈົດທະບຽນ.

ກ່ຽວກັບການສະເໜີສືບຕໍ່ຮັກສາສະຖານະການເປັນບໍລິສັດຈົດທະບຽນ

ຮຽນ : ບັນດາຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າຜູ້ຖືຮຸ້ນ ທີ່ນັບຖື

ຂ້າພະເຈົ້າຂໍຖືເປັນກຽດສະເໜີກ່ຽວກັບການສະເໜີສືບຕໍ່ຮັກສາສະຖານະການເປັນບໍລິສັດ ຈົດທະບຽນຕໍ່ກອງປະຊຸມ ເຊິ່ງມີລາຍລະອຽດດັ່ງນີ້:

ອີງຕາມແຈ້ງການຂອງ ຕລຊລ ເລກທີ 652/ຕລຊລ ລົງວັນທີ 07/05/2025, ໄລຍະການຈັດຕັ້ງປະຕິບັດແຜນການປັບປຸງ ແລະ ຟື້ນຟູທຸລະກິດຂອງບໍລິສັດ ພາຍໃນ 3 ປີ (ນັບຈາກວັນທີ 29/04/2022 - 29/04/2025) ແມ່ນໄດ້ສິ້ນສຸດແລ້ວ, ນອກຈາກນັ້ນ, ອີງຕາມເອກະສານລາຍງານການເງິນປະຈຳປີ 2024 ຂອງບໍລິສັດ ເຫັນວ່າຍັງບໍ່ມີການເຄື່ອນໄຫວທຸລະກິດຕົ້ນຕໍ ແລະ ຂາດທຶນຈາກການເຄື່ອນໄຫວທຸລະກິດປີ 2024, ສະນັ້ນ, ຕລຊລ ສະເໜີໃຫ້ບໍລິສັດແຈ້ງເຈດຈຳນົງກ່ຽວກັບການຮັກສາສະຖານະການເປັນບໍລິສັດຈົດທະບຽນ ພ້ອມທັງແຜນການເຄື່ອນໄຫວທຸລະກິດ 3 ປີໃນຕໍ່ໜ້າ.

ຂໍ້ສະເໜີດັ່ງກ່າວໄດ້ຜ່ານການພິຈາລະນາ ແລະ ຮັບຮອງຢູ່ກອງປະຊຸມສະພາບໍລິຫານສາມັນ ສະໄໝທີ 10 ປີ 2025 ຂອງ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ.

ດັ່ງນັ້ນ, ຈຶ່ງສະເໜີຕໍ່ກອງປະຊຸມ ເພື່ອພິຈາລະນາ ແລະ ຮັບຮອງ.

ຜູ້ລາຍງານ : ທ່ານ ເນ້ຍເຫຼຍ

ເອກະສານຕິດຄັດ 03 :

ແຜນການດຳເນີນທຸລະກິດປີ 2026 - 2028
ຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳ ລາວ ມະຫາຊົນ

ຮຽນ : ບັນດາຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າຜູ້ຖືຮຸ້ນ ທີ່ນັບຖື

ຂ້າພະເຈົ້າຂໍຖືເປັນກຽດສະເໜີແຜນການດຳເນີນທຸລະກິດຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳ ລາວ ມະຫາຊົນ ປີ 2026 – 2028 ຕໍ່ກອງປະຊຸມ ເຊິ່ງມີລາຍລະອຽດດັ່ງນີ້:

I. ຈຸດປະສົງ

ແຜນດຳເນີນທຸລະກິດນີ້ ໄດ້ກຳນົດແຜນຍຸດທະສາດສຳຄັນຂອງບໍລິສັດ ສຸມໃສ່ໃນໂຄງການທີ່ສາມາດສ້າງກຳໄລໃຫ້ກັບບໍລິສັດ, ຜ່ານການວາງແຜນຕໍ່ວິທີການດຳເນີນທຸລະກິດຢ່າງສົມເສດສົມຜົນ ວິເຄາະທ່າອ່ຽງຂະຫຍາຍຕົວຂອງຕະຫຼາດຢ່າງເລິກເຊິ່ງ, ຄາດຄະເນຂໍ້ມູນການເງິນຢ່າງແຈ້ງຊັດ, ສະໜອງຫຼັກຖານການຕັດ ສິນໃຫ້ແກ່ຄະນະອຳນວຍການ, ຂາຮຸ້ນ ແລະ ພາກສ່ວນກ່ຽວຂ້ອງ, ຊຸກຍູ້ບໍລິສັດໃຫ້ບັນລຸການເພີ່ມຂຶ້ນທາງດ້ານຜົນກຳໄລ ແລະ ການພັດທະນາແບບຍືນຍົງໃນຂົງເຂດວັດທະນະທຳ ທ່ອງທ່ຽວ ແລະ ຂົງເຂດທີ່ກ່ຽວຂ້ອງ ຍົກສູງຄວາມສາມາດແຂ່ງຂັນດ້ານການຕະຫຼາດ ແລະ ອິດທິພົນຊື່ສຽງຂອງຍີ່ຫໍ້.

II. ສະພາບການດຳເນີນທຸລະກິດຂອງບໍລິສັດໃນໄລຍະເບື້ອງຕົ້ນ

1. ໂຄງການກໍ່ສ້າງອາຄານວັດທະນະທຳ ທ່ອງທ່ຽວ

ໂຄງການນີ້ໄດ້ຈັດພິທີວາງສີລາລຶກໃນວັນທີ 25/04/2023, ໄດ້ສຳເລັດໂຄງສ້າງເບຕົ້ງຕຶກໃນວັນທີ 21/10/2025, ທັງໝົດເປັນ 20 ຊັ້ນ, ຄາດວ່າຈະສຳເລັດການຕົບແຕ່ງໃນໄຕມາດທີ 1 ຂອງປີ 2026 ເຊິ່ງ ສາມາດນຳໃຊ້ ແລະ ຂາຍໄດ້.

2. ໂຄງການກໍ່ສ້າງເຂດສາທິດເສດຖະກິດອຸດສາຫະກຳ ວັດທະນະທຳ ທ່ອງທ່ຽວ ວັງວຽງ

ໂຄງການນີ້ ຕັ້ງຢູ່ບ້ານຂັນໝາກ ເມືອງວັງວຽງ ແຂວງວຽງຈັນ ກວມເອົາເຂດພື້ນທີ່ໂຮງງານຊີມັງວັງວຽງ ຫຼັງ 1, ຫຼັງ 2 ແລະ ເຂດດ້ານຫຼັງຂອງໂຮງງານ, ໄດ້ສຳເລັດແຜນການລວມ ແລະ ບົດວິພາກຄວາມເປັນໄປຂອງໂຄງການນີ້ ເຊິ່ງໄດ້ຮັບຮອງຜ່ານແຂວງວຽງຈັນ ແລະ ກະຊວງ ຖວທ ແລ້ວ, ຄາດວ່າຈະສຳຫຼວດການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ວັດແທກເນື້ອທີ່ດິນທີ່ຈະນຳໃຊ້ເຂົ້າໃນໂຄງການຕົວຈິງໃນເດືອນ 1 ປີ 2026.

3. ໂຄງການກໍ່ສ້າງເຂດຣີສອດສາກົນ ໜອງສີຟ້າດອງຈັນ ວັງວຽງ (ສູນຝຶກອົບຮົມວັງວຽງ ກະຊວງປ້ອງກັນປະເທດ)

ໂຄງການນີ້ ຕັ້ງຢູ່ບ້ານໂພນຊ ເມືອງວັງວຽງ ແຂວງວຽງຈັນ ກວມເນື້ອທີ່ປະມານ 24 ເຮັກຕາ, ປັດຈຸບັນນີ້ ກຳລັງກະກຽມວຽກງານກໍ່ສ້າງເບື້ອງຕົ້ນ ເຊັ່ນ : ເດີນລະບົບໄຟຟ້າ, ລະບົບນ້ຳ ແລະ ສ້ອມແປງເສັ້ນທາງຕ່

4. ໂຄງການກໍ່ສ້າງຕະຫຼາດຈຳໜ່າຍເຄື່ອງອາໄຫລ່ກົນຈັກກະສິກຳ

ໂຄງການນີ້ ຕັ້ງຢູ່ບ້ານໂນນຂີ້ເຫຼັກ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ ເປັນກຸ່ມສິ່ງປຸກສ້າງທີ່ໄດ້ກອມເອົາດ້ານການຄ້າ, ທີ່ພັກ, ໂຮງແຮມ ແລະ ຫ້ອງການຢູ່ເຂດດຽວກັນ ໄດ້ຈັດພິທີວາງສີລາລຶກໃນວັນທີ 04/04/2024 ໂຄງການນີ້ຈະແບ່ງວຽກງານການກໍ່ສ້າງເປັນໄລຍະ ເຊິ່ງເນື້ອທີ່ການກໍ່ສ້າງຂອງໄລຍະກໍ່ສ້າງທີ 1 ໄດ້ສຳເລັດແລ້ວ ປະມານ 3,000 ຕາແມັດ.

5. ໂຄງການກໍ່ສ້າງຕຶກທີ່ພັກຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ໂຄງການນີ້ ຕັ້ງຢູ່ບ້ານໂນນສະຫວ່າງ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ, ກວມເນື້ອທີ່ 1,185 ຕາແມັດ ເປັນຕຶກ 3 ຊັ້ນ ມີຫ້ອງນອນທັງໝົດ 21 ຫ້ອງ, ຄາດວ່າຈະສຳເລັດໃນເດືອນ 12 ປີ 2025, ຫຼັງຈາກສຳເລັດແລ້ວ ຈະຖືກນຳໃຊ້ເອງ, ໃຫ້ເຊົ່າ ຫຼື ຂາຍໄດ້ຕາມສະພາບຕົວຈິງ.

6. ໂຄງການກໍ່ສ້າງພະພຸດທະຮູບຢູ່ຈອມພູຜາບິ່ວ

ໂຄງການນີ້ ຕັ້ງຢູ່ຈອມພູຜາບິ່ວ ບ້ານນາຄູນ ເມືອງວັງວຽງ ແຂວງວຽງຈັນ ຫ່າງຈາກເຂດສາທິດເສດຖະກິດອຸດສາຫະກຳ ການທ່ອງທ່ຽວ ວັດທະນະທຳ ວັງວຽງ ປະມານ 12 ກິໂລແມັດ, ໄດ້ສຳເລັດແຜນການອອກແບບລະອຽດ ແລະ ວຽກງານການສຳຫຼວດ, ຜູ້ຮັບເໝົາການກໍ່ສ້າງໄດ້ເຂົ້າປະຈຳການຢູ່ພາກສະໜາມແລ້ວ, ຄາດວ່າຈະເລີ່ມການກໍ່ສ້າງໃນທ້າຍເດືອນ 11 ປີ 2025.

7. ໂຄງການທາງດ້ານບໍ່ແຮ່

ວັນທີ 3/06/2024 ທາງບໍລິສັດໄດ້ເຊັນສັນຍາການຮ່ວມມືພັດທະນາດ້ານຂົງເຂດບໍ່ແຮ່ຢູ່ແຂວງຫົວພັນ ກັບ ບໍລິສັດ ລັດພັດທະນາຊົນນະບົດ ກະຊວງປ້ອງກັນປະເທດ, ຫຼັງຈາກນັ້ນ, ໄດ້ສະເໜີຂໍສຳປະທານນຳລັດຖະບານ ຕາມຂັ້ນຕອນ ແລະ ໄດ້ຮັບອະນຸມັດແລ້ວ.

8. ການຊື້ຮຸ້ນຂອງສູນຜະລິດຮູບເງົາ ແລະ ລາຍການໂທລະພາບ ຈຳກັດ

ຜ່ານການເຈລະຈະກັນກັບຄູ່ຮ່ວມມືເປັນຫຼາຍຄັ້ງແລ້ວ ໄດ້ເຊັນສັນຍາຊື້ຮຸ້ນ ແລະ ກາຍເປັນຂາຮຸ້ນທີ່ຖືຮຸ້ນ 50% ຂອງສູນຜະລິດຮູບເງົາ ແລະ ລາຍການໂທລະພາບ ຈຳກັດ ຢ່າງເປັນທາງການໃນວັນທີ 06/12/2024 ເຊິ່ງປີນີ້ມີ ແຜນວຽກກ່ຽວກັບການຖ່າຍທຳຮູບເງົາ, ການຈັດເວທີປຶກສາຫາລື, ງານວາງສະແດງ, ມະຫາກຳຮູບເງົາ, ມະຫາກຳ ດົນຕີ ແລະ ກິດຈະກຳອື່ນໆຫຼາກຫຼາຍຢ່າງ.

9. ການໂອນຮຸ້ນຂອງບໍລິສັດ ຟາສະຕາ ໂຕແບກໂຄ ການຄ້າ ຈຳກັດ

ຜ່ານການເຈລະຈະກັນກັບຄູ່ຮ່ວມມືເປັນຫຼາຍຄັ້ງແລ້ວ ໄດ້ເຊັນສັນຍາການໂອນຮຸ້ນ ແລະ ກາຍເປັນຂາຮຸ້ນທີ່ຖືຮຸ້ນ 20% ຂອງບໍລິສັດ ຟາສະຕາ ໂຕແບກໂຄ ການຄ້າ ຈຳກັດ ຢ່າງເປັນທາງການໃນວັນທີ 16/12/2024, ປີນີ້ໄດ້ເລີ່ມດຳເນີນກິດຈະການຈຳໜ່າຍຢາສູບຕາມລະບຽບການທີ່ກ່ຽວຂ້ອງແລ້ວ.

III. ໂຄງການສຳຄັນທີ່ຈະສ້າງຜົນກຳໄລ ແລະ ແຜນພັດທະນາດຳເນີນທຸລະກິດ 3 ປີຂ້າງໜ້າ

ອີງຕາມໄລຍະເວລາການລົງທຶນຂອງຂາຮຸ້ນຝ່າຍຈີນ, ແຜນການປັບປຸງ ແລະ ຟື້ນຟູທຸລະກິດຂອງບໍລິສັດ ແລະ ບົດວິພາກໂຄງການກໍ່ສ້າງເຂດສາທິດອຸດສາຫະກຳເສດຖະກິດວັດທະນະທຳ ທ່ອງທ່ຽວ ວັງວຽງ, ທາງບໍລິສັດຈະໃຫ້ບຸລິມະສິດແກ່ໂຄງການທີ່ກ່ຽວພັນກັບຂະແໜງການວັດທະນະທຳ ທ່ອງທ່ຽວ ແລະໂຄງການທີ່ຈະສ້າງລາຍຮັບໂດຍໄວ ຄືດັ່ງນີ້:

1. ໂຄງການກໍ່ສ້າງອາຄານອັດທະນະທຳ ທ່ອງທ່ຽວ

ປີ 2026 ຈະສຳເລັດວຽກການຕົບແຕ່ງຂອງອາຄານອັດທະນະທຳ ທ່ອງທ່ຽວ ລວມເຂດສາທາລະນະ, ເຂດຫ້ອງການ ແລະເຂດອື່ນໆ ພ້ອມກັນນັ້ນ, ຈະສັ່ງຊື້ ແລະ ຕິດຕັ້ງເຄື່ອງຕິດຕັ້ງ ເຄື່ອງອຸປະກອນທີ່ກ່ຽວຂ້ອງ ເພື່ອຮັບປະກັນໃຫ້ຕຶກອາຄານມີເງື່ອນໄຂຄົບຖ້ວນທີ່ສາມາດດຳເນີນງານໄດ້ປົກກະຕິ, ຕາມແຜນຈະນຳໃຊ້ເປັນປົກກະຕິໃນກາງປີ 2026 ບໍ່ພຽງແຕ່ຈະເປັນຫ້ອງການຂອງບໍລິສັດ ຍັງເປັນຫ້ອງການຂອງພາກສ່ວນທີ່ມີການຮ່ວມມື ສາມາດສ້າງລາຍຮັບໃຫ້ແກ່ບໍລິສັດໂດຍຜ່ານການເຊົ່າຫ້ອງການ. ປີ 2027 - 2028 ຈະສືບຕໍ່ປັບປຸງການດຳເນີນງານຂອງຕຶກອາຄານໃຫ້ດີ ຍົກສູງຄຸນນະພາບການໃຫ້ບໍລິການ, ປັບປຸງນະໂຍບາຍການເຊົ່າຫ້ອງອີງຕາມຄວາມຕ້ອງການຕະຫຼາດ ຍົກສູງອັດຕາການເຊົ່າຫ້ອງ,ເສີມຂະຫຍາຍບົດບາດການເປັນຫ້ອງການ ແລະ ການຄ້າຂອງຕຶກອາຄານ ເພື່ອໃຫ້ເພີ່ມລາຍຮັບຕື່ມອີກ.

2. ໂຄງການກໍ່ສ້າງພະພຸດທະຮູບຢູ່ຈອມພູຜາບົ່ວ

ໂຄງການນີ້ໄດ້ຮັບການເອົາໃຈໃສ່ ແລະ ການສະໜັບສະໜູນຢ່າງສູງຈາກສູນກາງແນວລາວສ້າງຊາດ ແລະ ຜູ້ນຳພາທາງສາສະໜາພຸດ. ໄດ້ສຳເລັດແຜນອອກແບບຈິດສຳນຶກ ແລະ ແຜນຜັງກໍ່ສ້າງລະອຽດ ພ້ອມທັງເຮັດເອກະສານອະນຸມັດທີ່ກ່ຽວຂ້ອງຕາມຈັ້ນຕອນ. ວາງແຜນຈະເລີ່ມກໍ່ສ້າງພາກສ່ວນສຳຄັນໃນຕົ້ນປີ 2026 ໄລຍະເວລາກໍ່ສ້າງປະມານ 30 ເດືອນ. ພ້ອມກັນນັ້ນ, ໄດ້ສ້າງບໍລິສັດ ດຳເນີນງານ ແລະ ບໍລິຫານເຂດທ່ອງທ່ຽວ ພູຜາບົ່ວ ລາວ ຈຳກັດຜູ້ດຽວ ເພື່ອດຳເນີນການວາງແຜນ ແລະ ກໍ່ສ້າງສິ່ງຕິດຕັ້ງປະກອບເປັນຊຸດຢູ່ແຖວອ້ອມຂ້າງພະພຸດທະຮູບ ເຊັ່ນ: ຈຸດຊົມວິວ, ເຂດການຄ້າ, ສິ່ງຕິດຕັ້ງອຳນວຍຄວາມສະດວກ, ບ່ອນຈອດລົດ ແລະອື່ນໆ ປັບປຸງການໃຫ້ບໍລິການດ້ານການທ່ອງທ່ຽວໃຫ້ສົມບູນຂຶ້ນ, ຈັດກິດຈະກຳການທ່ອງທ່ຽວດ້ານອັດທະນະທຳພຸດທະສາສະໜາ ເຊິ່ງຈະສ້າງລາຍຮັບໃຫ້ແກ່ບໍລິສັດຜ່ານການຂາຍປີ້, ຂາຍຂອງທີ່ລະນຶກ ແລະບໍລິການອື່ນໆ. ຜ່ານການດຳເນີນງານ ແລະ ສະຫຼັບຊ້ອນຊ້ອນພະຍາກອນຂອງບໍລິສັດ ດຳເນີນງານ ແລະ ບໍລິຫານເຂດທ່ອງທ່ຽວ ພູຜາບົ່ວ ລາວ ຈຳກັດຜູ້ດຽວ, ພ້ອມວາງແຜນຈະໃຫ້ບໍລິສັດດັ່ງກ່າວຈົດທະບຽນເຂົ້າຕະຫຼາດຫຼັກຊັບສິງກະໂປ.

3. ໂຄງການຜະລິດ ແລະ ປຸງແຕ່ງຜະລິດຕະພັນທ່ອງທ່ຽວ

ສຳລັບໄລຍະເບື້ອງຕົ້ນຂອງໂຄງການນີ້ ຈະເອົາການຜະລິດກາເຟເປັນຫຼັກ, ປີ 2026 ຈະສຳເລັດໃບອະນຸຍາດທີ່ກ່ຽວຂ້ອງຕາມຂັ້ນຕອນ, ເລີ່ມການກໍ່ສ້າງໂຮງງານ ແລະ ສັ່ງຊື້ເຄື່ອງອຸປະກອນກ່ຽວກັບໂຮງງານກາເຟ, ຫຼັງຈາກນັ້ນ ສຳເລັດການກໍ່ສ້າງໂຮງງານ ແລະ ຕິດຕັ້ງ ປັບທົດລອງເຄື່ອງອຸປະກອນດັ່ງກ່າວແລ້ວ, ຈະເລີ່ມເກັບຊື້ເມັດກາເຟ ເພື່ອປຸງແຕ່ງ ແລະ ຜະລິດກາເຟ, ສ້າງຍີ່ຫໍ້ກາເຟ ແລະ ຊ່ອງທາງການຂາຍ, ຜະລິດຈຳນວນໜຶ່ງເພື່ອລອງຈຳໜ່າຍ, ຮັບຜົນປະໂຫຍດເປັນໄລຍະເບື້ອງຕົ້ນ. ປີ 2027 ຈະຂະຫຍາຍຂະໜາດການຜະລິດ, ປັບປຸງເຕັກນິກການຜະລິດ, ຍົກສູງຄຸນນະພາບ ແລະ ປະລິມານການຜະລິດ, ຂະຫຍາຍຕະຫຼາດໄປສູ່ຕ່າງປະເທດ, ສ້າງລາຍຮັບທີ່ໝັ້ນທ່ຽງຜ່ານການຈຳໜ່າຍກາເຟ ສ້າງຍີ່ຫໍ້ກາເຟລາວ ທີ່ມີຊື່ສຽງ ແລະ ກຳລັງການແຂ່ງຂັນ.

4. ໂຄງການກໍ່ສ້າງຕະຫຼາດຈຳໜ່າຍເຄື່ອງອາໄຫລ່ກົນຈັກກະສິກຳ

ປີ 2026 ຈະສຳເລັດໄລຍະກໍ່ສ້າງທີ 1 ແລະ ການຕົບແຕ່ງສ່ວນທີ່ເຫຼືອ, ໃຫ້ໂຄງການໄລຍະທີ 1 ສາມາດນຳໃຊ້ເປັນທາງການ. ປີ 2027 ເລີ່ມກໍ່ສ້າງໂຄງການໃນໄລຍະ ທີ 2 ຂະຫຍາຍຂະໜາດຕະຫຼາດ, ເພີ່ມເຂດການຄ້າ, ເຂດພັກເຊົາ ດຶງດູດຮ້ານຂາຍເຄື່ອງອາໄລ່ ແລະ ລູກຄ້າໃຫ້ຫຼາຍຂຶ້ນກວ່າເກົ່າ ເພື່ອເພີ່ມລະດັບລາຍຮັບລວມຂອງຕະຫຼາດ. ປີ 2028 ສຳເລັດວຽກງານການກໍ່ສ້າງໄລຍະ ທີ 2 ແລະ ນຳໃຊ້ເປັນທາງການ, ຄຸ້ມຄອງເປັນເອກະພາບ

ຕະຫຼາດຕໍ່ຕະຫຼາດ, ສ້າງເປັນຕະຫຼາດປະສົມປະສານໄດ້ກອມການຄ້າ, ການວາງສະແດງ, ການບໍລິການຢູ່ບ່ອນດຽວ ກັນ.

5. ໂຄງການທາງດ້ານບໍ່ແຮ່

ປີ 2026 ສຳເລັດວຽກກະກຽມເປື້ອງຕົ້ນຂອງໂຄງການພັດທະນາເຂດບໍ່ແຮ່ຢູ່ແຂວງຫົວພັນ ເປັນຕົ້ນມີການສຳ ຫຼວດ, ການວາງແຜນການຂຸດຄົ້ນ, ການສັ່ງຊື້ເຄື່ອງອຸປະກອນ ແລະອື່ນໆ. ປີ 2027 - 2028 ຈະຄ່ອຍໆຂະຫຍາຍ ຂະໜາດການຂຸດຄົ້ນເທື່ອລະກ້າວ ປັບປຸງຂັ້ນຕອນການຂຸດຄົ້ນ ຍົກສູງອັດຕາການນຳໃຊ້ ແລະ ປະສິດທິພາບການ ຂຸດຄົ້ນຂອງຊັບພະຍາກອນບໍ່ແຮ່ ພ້ອມເພີ່ມທະວີວຽກການປົກປັກຮັກສາ ແລະ ຄຸ້ມຄອງສິ່ງແວດລ້ອມ ຮັບປະກັນ ການພັດທະນາແບບຍືນຍົງຂອງໂຄງການບໍ່ແຮ່.

IV. ການວິເຄາະສະພາບການຕະຫຼາດຂອງແຕ່ລະໂຄງການ

1. ໂຄງການກໍ່ສ້າງອາຄານວັດທະນະທຳ ທ່ອງທ່ຽວ

ສະພາບແວດລ້ອມດ້ານນະໂຍບາຍ: ລັດຖະບານລາວໄດ້ອອກມາດຕະການຊຸກຍູ້ຕ່າງໆ ເພື່ອດຶງດູດການລົງ ທຶນຈາກຕ່າງປະເທດ ລວມທັງການຫຼຸດຜ່ອນພາສີອາກອນ, ການໃຫ້ສິດທິພິເສດໃນການນຳໃຊ້ທີ່ດິນ ແລະ ໄດ້ ຜ່ອນຜັນຂໍ້ຈຳກັດຕໍ່ນັກລົງທຶນຕ່າງປະເທດເປັນເທື່ອລະກ້າວ, ໄດ້ສ້າງສະພາບແວດລ້ອມດ້ານນະໂຍບາຍທີ່ເອື້ອອຳ ນວຍຄວາມສະດວກໃຫ້ແກ່ການພັດທະນາ ແລະ ການດຳເນີນງານຂອງໂຄງການ.

ທີ່ຕັ້ງ ແລະ ສິ່ງອຳນວຍຄວາມສະດວກ: ອາຄານວັດທະນະທຳ ທ່ອງທ່ຽວ ຕັ້ງຢູ່ບ້ານໂພນພະເນົາ, ເມືອງໄຊ ເສດຖາ, ນະຄອນຫຼວງວຽງຈັນ, ຕິດກັບຖະໜົນໄກສອນ ພົມວິຫານ ແລະ ຫ່າງຈາກເດີ່ນທາດຫຼວງພຽງ 5 ນາທີໃນ ການຂັບລົດ. ເຂດອ້ອມຮອບພາຍໃນຂອບເຂດ 1 ກິໂລແມັດມີໂຮງຮຽນນາໆຊາດຫຼາຍແຫ່ງ, ສິ່ງອຳນວຍຄວາມ ສະດວກຄົບຖ້ວນ, ມີບ່ອນຈອດລົດສະເພາະ 2 ຊັ້ນ, ພ້ອມທັງມີສະລອຍນ້ຳຕະຫຼອດ 24 ຊົ່ວໂມງ, ຫ້ອງ ອອກກຳລັງກາຍລະດັບສູງ, ຮ້ານມິນິມາກ, ຮ້ານກາເຟ ແລະອື່ນໆ, ມີທ່າແຮງດ້ານທີ່ຕັ້ງ ແລະ ສິ່ງອຳນວຍຄວາມ ສະດວກໃນລະດັບໃດໜຶ່ງ.

ທ່າແຮງດ້ານຕະຫຼາດ: ຕະຫຼາດອະສັງຫາລິມະຊັບລາວ ກຳລັງຢູ່ໃນຂັ້ນຕອນເບື້ອງຕົ້ນ ແຕ່ກໍ່ສະແດງໃຫ້ເຫັນ ທ່າອ່ຽງການເຕີບໂຕ. ຄຽງຄູ່ກັບການເຕີບໂຕຢ່າງວ່ອງໄວຂອງຂະແໜງການທ່ອງທ່ຽວ ແລະ ການເລັ່ງລັດຂອງ ຂະບວນການຫັນເປັນຕົວເມືອງ, ໂຄງການປະສົມປະສານທີ່ລວມເອົາການຄ້າ, ທີ່ຢູ່ອາໄສ ແລະ ຫ້ອງການຢູ່ບ່ອນ ດຽວກັນ ແມ່ນສອດຄ່ອງກັບທ່າອ່ຽງການພັດທະນາຂອງຕະຫຼາດ, ສາມາດຕອບສະໜອງຄວາມຕ້ອງການຂອງກຸ່ມ ຄົນຕ່າງໆ.

2. ໂຄງການກໍ່ສ້າງພະພຸດທະຮູບໃຫຍ່ພູຜາບິ

ສາສະໜາພຸດມີມູນເຊື້ອວັດທະນະທຳອັນເລິກເຊິ່ງ ແລະ ພື້ນຖານປະຊາຊົນຈຳນວນຫຼວງຫຼາຍຢູ່ປະ ເທດລາວ ການທ່ອງທ່ຽວດ້ານວັດທະນະທຳສາສະໜາພຸດເປັນສ່ວນໜຶ່ງທີ່ສຳຄັນສຳລັບຂະແໜງການທ່ອງທ່ຽວຂອງລາວ ແຕ່ ລະປີ ໄດ້ດຶງດູດຊາວພຸດທະສາສະນິກະຊົນ ແລະ ນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດຢ່າງຫຼວງຫຼາຍ. ເມືອງ ວັງວຽງອຸດົມສົມບູນດ້ວຍຊັບພະຍາກອນການທ່ອງທ່ຽວ ເປັນສະຖານທີ່ແຫຼ່ງທ່ອງທ່ຽວທີ່ມີຊື່ສຽງ ມີພາບວິວທິວ ທັດທຳມະຊາດ ແລະ ພູມພາບວັດທະນະທຳມະນຸດຊາດເປັນເອກະລັກພິເສດ. ຫຼັງຈາກໂຄງການນີ້ສຳເລັດແລ້ວ ຈະ ກາຍເປັນສິ່ງປຸກສ້າງເອກະລັກຂອງທ້ອງຖິ່ນ ເຊື່ອມໂຍງກັບຊັບພະຍາກອນການທ່ອງທ່ຽວຂອງເມືອງວັງວຽງທີ່ມີຢູ່ ໃນປັດຈຸບັນ, ເພື່ອດຶງດູດນັກທ່ອງທ່ຽວໃຫ້ມາທ່ຽວຊົມຢູ່ເມືອງວັງວຽງໃຫ້ດົນນານກວ່າເກົ່າ, ປັດຈຸບັນນີ້, ເມືອງວັງ

ວຽງຍັງບໍ່ທັນມີໂຄງການຂະໜາດໃຫຍ່ກ່ຽວກັບສາສະໜາທີ່ເປັນເອກະລັກ ໂຄງການນີ້ຈະດຶງດູດນັກທ່ອງທ່ຽວເປັນຈຳນວນຫຼວງຫຼາຍ ມີກຳລັງບໍ່ມຊ້ອນການພັດທະນາທີ່ໃຫຍ່ຫຼວງ ແລະ ອະນາຄົດອັນສົດໃສໃນການສ້າງຜົນກຳໄລ.

ໂອກາດທີ່ມາຈາກການພັດທະນາຂະແໜງການທ່ອງທ່ຽວ: ຂະແໜງການທ່ອງທ່ຽວຂອງລາວມີທ່າອ່ຽງການພັດທະນາທີ່ດີນ, ຫົກເດືອນຕົ້ນປີຂອງປີ 2025, ໄດ້ຕ້ອນຮັບນັກທ່ອງທ່ຽວສາກົນ 2,3 ລ້ານ ເທື່ອຄົນ, ເພີ່ມຂຶ້ນ 2 ແສນ ເທື່ອຄົນ ເມື່ອທຽບໃສ່ໄລຍະດຽວກັນຂອງປີ 2024. ພາກສ່ວນຄຸ້ມຄອງຂະແໜງການທ່ອງທ່ຽວຂອງລາວ ວາງແຜນຈະເພີ່ມຈຳນວນນັກທ່ອງທ່ຽວເຂົ້າມາທ່ຽວລາວເຖິງ 40 ລ້ານ ເທື່ອຄົນ ໃນລະຫວ່າງປີ 2026 ຫາ 2030 ເຊິ່ງໄດ້ສ້າງພື້ນຖານທີ່ສຳຄັນສຳລັບການກໍ່ສ້າງໂຄງການນີ້.

ວັງວຽງເປັນຈຸດໝາຍປາຍທາງການທ່ອງທ່ຽວທີ່ໄດ້ຮັບຄວາມນິຍົມໃນລາວ, ກວມເອົາສ່ວນສຳຄັນສຳລັບລາຍຮັບຈາກຂະແໜງການທ່ອງທ່ຽວຂອງລາວ. ຄຽງຄູ່ກັບການສຳເລັດການກໍ່ສ້າງຂອງພື້ນຖານໂຄງລ່າງຕ່າງໆ ເຊັ່ນ " ໂຄງການຍົກລະດັບຖະໜົນທ່ອງທ່ຽວນ້ຳຕົກຕາດແກ້ງຍຸຍ ແລະ ຖະໜົນວົງວຽນແມ່ນ້ຳຊອງ ", ຈະຍົກສູງຄວາມສາມາດໃນການຮັບນັກທ່ອງທ່ຽວຂອງວັງວຽງຂຶ້ນຕື່ມ. ໂຄງການນີ້ເປັນໂຄງການທ່ອງທ່ຽວດ້ານວັດທະນະທຳ ຈະດຶງດູດນັກທ່ອງທ່ຽວໃຫ້ມາທ່ຽວຊົມຫຼາຍຂຶ້ນ ກາຍເປັນຈຸດເຕີບໂຕການທ່ອງທ່ຽວໃໝ່ຂອງວັງວຽງ.

ການສະໜັບສະໜູນດ້ານນະໂຍບາຍຢ່າງແຂງແຮງ: ເດືອນ ມີຖຸນາ ປີ 2025, ລັດຖະບານລາວໄດ້ຮັບຮອງເອົາ " ແຜນແມ່ບົດພັດທະນາ ແລະ ຄຸ້ມຄອງເຂດທ່ອງທ່ຽວລະດັບຊາດ ເມືອງທ່ອງທ່ຽວວັງວຽງ ", ຕົກລົງຍົກລະດັບວັງວຽງໃຫ້ເປັນເຂດທ່ອງທ່ຽວລະດັບຊາດ ເຊິ່ງຈະເຮັດໃຫ້ການພັດທະນາສິ່ງອຳນວຍຄວາມສະດວກດ້ານການທ່ອງທ່ຽວໃນວັງວຽງ ແລະ ເຂດອ້ອມຂ້າງມີຄວາມເປັນລະບຽບຮຽບຮ້ອຍຫຼາຍຂຶ້ນກວ່າເກົ່າ. ໂຄງການກໍ່ສ້າງພະພຸດທະຮູບໃຫຍ່ພູຜາບົວສອດຄ່ອງກັບແຜນພັດທະນາເຂດທ່ອງທ່ຽວວັງວຽງ, ອາດຈະໄດ້ຮັບການສະໜັບສະໜູນດ້ານນະໂຍບາຍກ່ຽວກັບທີ່ດິນ, ການອະນຸມັດ ແລະອື່ນໆ ຈາກລັດຖະບານເຊິ່ງຈະອຳນວຍຄວາມສະດວກໃຫ້ແກ່ການດຳເນີນໂຄງການ.

ຄວາມຕ້ອງການຕະຫຼາດມີກຳລັງບໍ່ມຊ້ອນອັນໃຫຍ່: ຊັບພະຍາກອນການທ່ອງທ່ຽວຂອງເມືອງວັງວຽງ ສ່ວນໃຫຍ່ແມ່ນໂຄງການທ່ອງທ່ຽວທຳມະຊາດ, ການຫຼິ້ນນ້ຳ, ຂາດໂຄງການທ່ອງທ່ຽວວັດທະນະທຳແບບຕົວເມືອງ. ຫຼັງຈາກໂຄງການກໍ່ສ້າງພະພຸດທະຮູບໃຫຍ່ພູຜົວບົວສຳເລັດແລ້ວ, ຈະກາຍເປັນສະຖານທີ່ທ່ອງທ່ຽວດ້ານວັດທະນະທຳທີ່ເປັນເອກະລັກຂອງວັງວຽງ, ສາມາດຕອບສະໜອງຄວາມຕ້ອງການຂອງນັກທ່ອງທ່ຽວຕໍ່ການທ່ອງທ່ຽວດ້ານວັດທະນະທຳ, ເຕີມເຕັມບ່ອນຫວ່າງຂອງຕະຫຼາດ, ມີທ່າແຮງດ້ານຄວາມຕ້ອງການຂອງຕະຫຼາດທີ່ໃຫຍ່ຫຼວງ.

ໂຄງການມີທ່າແຮງທີ່ໂດດເດັ່ນ: ເນື້ອໃນການກໍ່ສ້າງຂອງໂຄງການກໍ່ສ້າງພະພຸດທະຮູບໃຫຍ່ພູຜົວບົວ ລວມມີພື້ນຖານພະພຸດທະຮູບໃຫຍ່, ແທ່ນພະພຸດທະຮູບ, ເສັ້ນທາງ, ພາບວິວທິວທັດສີຂຽວ, ລະບົບການສະໜອງ ແລະ ລະບາຍນ້ຳ, ລະບົບໄຟຟ້າ, ຈຸດຊົມວິວ, ສິ່ງອຳນວຍຄວາມສະດວກ ແລະອື່ນໆ. ຫຼັງຈາກໂຄງການສຳເລັດແລ້ວ ຈະກາຍເປັນຈຸດສູນກາງສຳລັບການທ່ອງທ່ຽວ, ການຄ້າ, ການຖ່າຍທຳຮູບເງົາ-ໂທລະພາບ, ການແລກປ່ຽນຂໍ້ມູນຂ່າວສານ ແລະ ການຄ້າຂາຍເອເລັກໂຕນິກ, ບໍລິການທີ່ປຶກສາດ້ານການທ່ອງທ່ຽວ, ເຂດຈຸດສຸມນັກທ່ອງທ່ຽວ, ເຊິ່ງເປັນເຂດທ່ອງທ່ຽວປະສົມປະສານມີບັດບາດຄົບຖ້ວນ, ສາມາດສະໜອງບໍລິການໃຫ້ແກ່ນັກທ່ອງທ່ຽວຢ່າງຮອບດ້ານ, ຍົກສູງຄວາມດຶງດູດ ແລະ ຄວາມສາມາດການແຂ່ງຂັນຂອງໂຄງການ.

ການຊຸກຍູ້ການພັດທະນາເສດຖະກິດພາກພື້ນ: ພາຍໃຕ້ການຊຸກຍູ້ຈາກຂໍ້ລິເລີ່ມ " ໜຶ່ງແລວ ໜຶ່ງເສັ້ນທາງ " ແລະ ການເປີດນຳໃຊ້ທາງລົດໄຟລາວ-ຈີນຢ່າງເຕັມສ່ວນ, ເສດຖະກິດຂອງລາວໄດ້ຮັບໂອກາດໃໝ່ໃນການພັດທະນາ. ເມືອງວັງວຽງເປັນເຂດສຳຄັນຂອງລາວ, ເສດຖະກິດພາກພື້ນຂອງວັງວຽງກໍຈະໄດ້ຮັບການພັດທະນາເພີ່ມຕື່ມ. ເຊິ່ງຈະຍົກສູງລະດັບລາຍຮັບຂອງປະຊາຊົນທ້ອງຖິ່ນ, ເພີ່ມຄວາມສາມາດໃນການອຸປະໂພກບໍລິໂພກດ້ານການ

ທ່ອງທ່ຽວ, ພ້ອມທັງຈະດຶງດູດນັກລົງທຶນ ແລະ ວິສາຫະກິດຫຼາຍໃຫ້ເອົາໃຈໃສ່ຕໍ່ເມືອງວັງວຽງຫຼາຍຂຶ້ນ, ໄດ້ສະໜອງການສະໜັບສະໜູນທີ່ເຂັ້ມແຂງໃຫ້ແກ່ອະນາຄົດຕະຫຼາດຂອງໂຄງການກໍ່ສ້າງພະພຸດທະຮູບໃຫຍ່ພູຜາບ໋ວ.

3. ໂຄງການຜະລິດ ແລະ ປຸງແຕ່ງຜະລິດຕະພັນທ່ອງທ່ຽວ

ຄຸນນະພາບ ແລະ ລົດຊາດທີ່ເປັນເອກະລັກ: ກາເຟທີ່ປູກຢູ່ປະເທດລາວສ່ວນຫຼາຍແມ່ນມີສອງຊະນິດຄື: ໂຣບັສຕາ ແລະ ອາຣາບິກາ. ພູພຽງບໍລະເວນມີແສງແດດ ແລະ ນ້ຳຝົນທີ່ພຽງພໍ, ອາກາດເຢັນສະບາຍ, ມີດິນພູໄຟທີ່ອຸດົມສົມບູນມີທາດອາຊິດ, ໄດ້ສ້າງເງື່ອນໄຂທີ່ດີໃຫ້ແກ່ການເຕີບໂຕຂອງຕົ້ນກາເຟ. ກາເຟລາວໄດ້ຮັບຄວາມນິຍົມຈາກຜູ້ຮັກກາເຟທີ່ມັກລົດຊາດທີ່ໂດດເດັ່ນຫຼາຍຂຶ້ນ ດ້ວຍລົດຊາດທີ່ເປັນເອກະລັກ ແລະ ການເປັນຕົ້ນກຳເນີດຂອງການປູກແບບອິນຊີ.

ສາມາດເຮັດເປັນຜະລິດຕະພັນທ່ອງທ່ຽວ: ກາເຟເຢັນເປັນຜະລິດຕະພັນເອກະລັກຂອງກາເຟລາວ, ນຳເອົາຖົ່ວກາເຟທີ່ອົບແຫ້ງມາບົດເປັນຜົງກາເຟແລ້ວຊົງດ້ວຍນ້ຳ, ປະສົມກັບນົມຈືດ ແລະ ນ້ຳກ້ອນ, ມີລົດຊາດເຢັນດີ ແລະ ຫອມຫວານ. ວິທີການດື່ມກາເຟທີ່ເປັນເອກະລັກດັ່ງກ່າວມີລັກສະນະພິເສດຂອງເຂດອາຊີຕາເວັນອອກສຽງໃຕ້ທີ່ເດັ່ນຊັດ, ເປັນຂັ້ນຕອນສຳຄັນສຳລັບນັກທ່ອງທ່ຽວໃນດການສຳຜັດກັບວັດທະນະທຳລາວ, ສາມາດພັດທະນາເປັນຜະລິດຕະພັນທ່ອງທ່ຽວເອກະລັກ.

ຄວາມຕ້ອງການຂອງຕະຫຼາດຈີນເພີ່ມຂຶ້ນ: ຕະຫຼາດກາເຟຈີນໄດ້ພັດທະນາຢ່າງວ່ອງໄວໃນຊຸມປີມໍ່ໆມານີ້, ຄວາມຕ້ອງການຂອງຜູ້ບໍລິໂພກຕໍ່ກາເຟ, ໂດຍສະເພາະແມ່ນມີຄວາມສົນໃຈນັບມື້ນັບເພີ່ມຂຶ້ນຕໍ່ກາເຟທີ່ມີລົດຊາດພິເສດ ແລະ ເປັນເອກະລັກ. ຄຽງຄູ່ກັບການຍົກລະດັບການບໍລິໂພກ, ຄວາມຕ້ອງການຂອງຜູ້ບໍລິໂພກຈີນຕໍ່ກາເຟລຸ້ນດີຍັງສືບຕໍ່ເພີ່ມຂຶ້ນ, ໄດ້ສ້າງຕະຫຼາດທີ່ກວ້າງຂວາງໃຫ້ແກ່ກາເຟລາວ. ປີ 2023, ມູນຄ່າການສົ່ງອອກກາເຟລາວປະມານ 76,6 ລ້ານໂດລາສະຫະລັດ, ແຕ່ມູນຄ່າການສົ່ງອອກກາເຟໄປສູ່ຕະຫຼາດຈີນມີພຽງປະມານ 594.000 ໂດລາສະຫະລັດ, ສະແດງໃຫ້ເຫັນວ່າມີຕະຫຼາດທີ່ກວ້າງຂວາງ.

ຜົນປະໂຫຍດຈາກນະໂຍບາຍ RCEP: ເຂດການຄ້າເສລີຈີນ-ອາຊຽນແບບ 3,0 ໄດ້ຍົກເລີກພາສີອາກອນສິນຄ້າຫຼາຍກວ່າ 90%, ກາເຟ ແລະ ຜະລິດຕະພັນທີ່ກ່ຽວຂ້ອງໄດ້ກ້າວເຂົ້າສູ່ສະໄໝຍົກເວັ້ນພາສີອາກອນ. ກາເຟລາວເຂົ້າສູ່ຕະຫຼາດຈີນຜ່ານທາງລົດໄຟລາວ-ຈີນ, ຄ່າຂົນສົ່ງຈະຫຼຸດລົງ 28%, ມີທ່າແຮງໃນການແຂ່ງຂັນທີ່ເດັ່ນຊັດ.

4. ໂຄງການກໍ່ສ້າງຕະຫຼາດຈຳໜ່າຍເຄື່ອງອາໄຫລ່ກົນຈັກກະສິກຳ

ປະເທດລາວເປັນປະເທດກະສິກຳ ເຊິ່ງກະສິກຳເປັນຂະແໜງການທີ່ສຳຄັນສຳລັບເສດຖະກິດລາວ ຄຽງຄູ່ກັບຂະບວນການພັດທະນາກະສິກຳທັນສະໄໝ ຄວາມຕ້ອງການຕໍ່ເຄື່ອງອາໄຫລ່ ແລະ ກົນຈັກກະສິກຳກໍ່ໄດ້ນັບມື້ນັບເພີ່ມຫຼາຍຂຶ້ນກວ່າເກົ່າ. ນະຄອນຫຼວງວຽງຈັນເປັນຈຸດສູນກາງເສດຖະກິດ ການຄົມມະນາຄົມມີຄວາມສະດວກສະບາຍ ເໝາະແກ່ການສ້າງຕະຫຼາດຈຳໜ່າຍເຄື່ອງອາໄຫລ່ກົນຈັກກະສິກຳ. ປັດຈຸບັນນີ້ ຍັງຂາດເຂີນຕະຫຼາດຈຳໜ່າຍເຄື່ອງອາໄຫລ່ກົນຈັກກະສິກຳປະສົມປະສານ, ຮ້ານຂາຍເຄື່ອງອາໄຫລ່ທີ່ມີໃນປັດຈຸ ບັນແຈກຢາຍຢູ່ແຕ່ລະບ່ອນ ໄດ້ສ້າງຄວາມຫຍຸ້ງຍາກໃນການຈັດຊື້ເຄື່ອງອາໄຫລ່ ແຕ່ໂຄງການກໍ່ສ້າງນີ້ສາມາດສະຫຼັບຊັບຊ້ອນຊັບພະຍາກອນທີ່ກ່ຽວຂ້ອງໃຫ້ສາມາດເຕົ້າໂຮມຢູ່ບ່ອນດຽວກັນໄດ້, ສະໜອງຊ່ອງທາງສັ່ງຊື້ທີ່ສະດວກໃຫ້ແກ່ຊາວກະສິກອນ ແລະ ວິສາຫະກິດ ມີຄວາມຕ້ອງການຢ່າງສູງໃນຕະຫຼາດ. ຫຼັງຈາກສຳເລັດໂຄງການກໍ່ສ້າງນີ້ແລ້ວ ຈະກາຍເປັນສູນການຄ້າທີ່ສຳຄັນໃນເຂດນີ້ ດຶງດູດລູກຄ້າຢູ່ເຂດອ້ອມຂ້າງ ມີກຳລັງປົ່ມຊ້ອນການພັດທະນາທີ່ໃຫຍ່ຫຼວງ ແລະ ອະນາຄົດອັນສົດໃສໃນການສ້າງຜົນກຳໄລ.

5. ໂຄງການທາງດ້ານບໍ່ແຮ່

ການຟື້ນຟູຂອງເສດຖະກິດທົ່ວໂລກໄດ້ຊຸກນຳຄວາມຕ້ອງການຕໍ່ຊັບພະຍາກອນບໍ່ແຮ່, ແຮ່ທາດຕ່າງໆໄດ້ນຳໃຊ້ຢ່າງກວ້າງຂວາງໃນຂົງເຂດການຜະລິດອຸດສາຫະກຳ, ການກໍ່ສ້າງ ແລະຂົງເຂດອື່ນໆ ຄວາມຕ້ອງຂອງການຕະຫຼາດມີຄວາມໝັ້ນຄົງ. ແຂວງຫົວພັນມີຊັບພະຍາກອນບໍ່ແຮ່ທີ່ອຸດົມສົມບູນ ມີມູນຄ່າພັດທະນາສູງ ແລະບໍລິສັດໄດ້ຮັບອະນຸມັດຈາກພາກສ່ວນທີ່ກ່ຽວຂ້ອງ ມີສິດຂຸດຄົ້ນຖືກຕ້ອງຕາມກົດໝາຍ ສາມາດພັດທະນາຊັບພະຍາກອນບໍ່ແຮ່ຢ່າງສົມເຫດສົມຜົນ ບົນພື້ນຖານການປົກປັກຮັກສາສິ່ງແວດລ້ອມ ແລະ ກົດໝາຍ ແລະລະບຽບການທີ່ກ່ຽວຂ້ອງ ຕອບສະໜອງຄວາມຕ້ອງການຂອງຕະຫຼາດ ພ້ອມກັນນັ້ນ ສາມາດສ້າງທ່າແຮງໃຫ້ແກ່ຕົນເອງໃນການແຂ່ງຂັນຕະຫຼາດໂດຍຜ່ານການປັບປຸງວິທີການຂຸດຄົ້ນ ແລະ ຈຳໜ່າຍ ບັນລຸການສ້າງຜົນປະໂຫຍດທີ່ໝັ້ນຄົງຈາກຈຳໜ່າຍ ມີອະນາຄົດອັນສົດໃສໃນຕະຫຼາດ ແລະ ການສ້າງຜົນກຳໄລ.

V. ການຄາດຄະເນດ້ານການເງິນ

(1) ໂຄງການກໍ່ສ້າງອາຄານອັດທະນະທຳ ທ່ອງທ່ຽວ

1. ການຄາດຄະເນຕົ້ນທຶນໂຄງການ

ລ/ດ	ລາຍການ	ຕົ້ນທຶນລວມ (ພັນໂດລາ)
1	ໂຄງປະກອບໂຕສຳຄັນ	3.282,3
2	ວິສະວະກຳພື້ນຖານ	626,9
3	ລາຄາທີ່ດິນ	660,0
4	ສິ່ງຕິດສ້າງເປັນຊົ່ວຄາວ	51,1
5	ອອກແບບ	90,0
6	ດັດແກ້ໃບຕາດິນ ແລະ ໃບອະນຸຍາດກໍ່ສ້າງ	26,0
7	ຕິດຕັ້ງໝໍ້ແປງ 500KVA	11,9
8	ໂຄງປະກອບສອງເທື່ອ (ຝາ, ປ່ອງຢ້ຽມ, ປະຕູ)	1.845,9
9	ລະບົບໄຟຟ້າ, ລະບົບນ້ຳຝັ່ງລ່ວງໜ້າ	480,8
11	ຕິດຕັ້ງຮາວ	91,8
12	ລະບົບດັບເພີງຝັ່ງລ່ວງໜ້າ	271,9
14	ຕົບແຕ່ງພາຍໃນ	2.735,6
15	ສຳຫຼວດ-ກວດກາໂຄງການ (ລັດຖະບານ)	27,9
16	ລິບ	98,2
17	ງົບປະມານອື່ນໆ (ເງິນເດືອນພະນັກງານການຂາຍ, ໂຄສະນາ)	557,3
ລວມ (USD)		10.857,6

ເດືອນ 4 ປີ 2026 ຈະສຳເລັດໂຄງການກໍ່ສ້າງນີ້, ຊັ້ນ 4-20 ເປັນຫ້ອງຄອນໂດມິນຽມ ເນື້ອທີ່ສາມາດຂາຍໄດ້ທັງໝົດ 14026 ຕາແມັດ ລາຄາຂາຍ 1370 ໂດລາ/ຕາແມັດ (ບໍ່ລວມອາກອນ), ລາຍຮັບຈາກການຂາຍບັນລຸ 19.200 ພັນໂດລາ.

ຫຼັງຈາກໄດ້ເກັບກຳຂໍ້ມູນຕໍ່ໂຄງການອະສັງຫາລິມະສັບທີ່ຕັ້ງຢູ່ໃນນະຄອນຫຼວງເກືອບ 60 ໂຄງການແລ້ວ ສັງເກດເຫັນວ່າໂຄງການດັ່ງກ່າວມີລະດັບສູງ, ປານກາງ ແລະ ຕ່ຳ, ລາຄາຂາຍ 1000 - 3200 ໂດລາ/ຕາແມັດ (ບໍ່ລວມອາກອນ), ສ່ວນໂຄງການທີ່ມີລະດັບສ່ຳກັນກັບໂຄງການອາຄານອັດທະນະທຳ ທ່ອງທ່ຽວ ລາຄາຂາຍ 1700 ຂຶ້ນໄປໂດລາ/ຕາແມັດ (ບໍ່ລວມອາກອນ), ເພື່ອຮັບປະກັນໃຫ້ບັນລຸຜົນກຳໄລ ການຄາດຄາເມຜົນກຳໄລ ແມ່ນອີງຕາມລາຄາຂາຍສະເລ່ຍ 1370 ໂດລາ/ຕາແມັດ (ບໍ່ລວມອາກອນ) ແຕ່ລາຄາຂາຍຕົວຈິງຈະປັບຕາມ ສະພາບການຕະຫຼາດ.

2. ການຄາດຄະເນຜົນກຳໄລ (ພັນໂດລາ):

ລາຍການ	ປີ 2026 E （35%）	ປີ 2027 E （45%）	ປີ 2028 E （20%）	ລວມ	ໝາຍເຫດ
I. ລາຍຮັບລວມ	**6.720,4**	**8.640,5**	**3.840,2**	**19.201,2**	ອາກອນມູນຄ່າເພີ່ມ 10%
II. ຕົ້ນທຶນລວມ	**3.255,0**	**3.265,5**	**3.030,2**	**9.140,8**	
ໃນນັ້ນມີ: ຕົ້ນທຶນດຳເນີນທຸລະກິດ	2.869,8	2.869,8	2.869,8	8.199,5	
ອາກອນດຳເນີນທຸລະກິດ	134,4	172,8	76,8	384,0	ຄາດວ່າອາກອນໂອນກຳມະສິດທີ່ດິນ 2%
ຄ່າໃຊ້ຈ່າຍບໍລິຫານ	0,0	0,0	0,0	0,0	
ຄ່າໃຊ້ຈ່າຍການຂາຍ	250,8	222,9	83,6	557,3	
ຄ່າໃຊ້ຈ່າຍການເງິນ	0,0	0,0	0,0	0,0	
III. ກຳໄລ	**3.465,4**	**5.375,0**	**810,0**	**10.060,4**	
ລົບ: ອາກອນລາຍໄດ້	422,1	1.075,0	162,0	1.659,1	
IV. ກຳໄລສຸດທິ	**3.043,3**	**4.300,0**	**648,0**	**8.401,3**	

(2) ໂຄງການກໍ່ສ້າງພະພຸດທະຮູບໃຫຍ່ພູຜາບ໊ອ

1. ແຫຼ່ງທຶນ ແລະ ແຜນການລົງທຶນ (ພັນໂດລາ):

ໄລຍະກໍ່ສ້າງ	ຈຳນວນເງິນລົງທຶນ	ເນື້ອໃນ	ແຫຼ່ງທຶນ
ໄລຍະກໍ່ສ້າງທີ 1 ປີ 2026-2027	20.000,0	ກໍ່ສ້າງໂຄງປະກອບສ່ວນສຳຄັນຂອງພະພຸດທະຮູບ ແລະ ພື້ນຖານໂຄງລ່າງ	1. ສ້າງຕັ້ງມູນນິທິ, ສະໜັບສະໜູນການກໍ່ສ້າງໂຄງປະກອບສ່ວນສຳຄັນຂອງພະພຸດທະຮູບ2. ລະດົມທຶນ (Private placement) ຈຳນວນ 30.000 ພັນໂດລາໃນນາມເຂດທ່ອງທ່ຽວພູຜາບ໊ອ ວັງວຽງ, ສະໜັບສະໜູນການກໍ່ສ້າງພື້ນຖານໂຄງລ່າງດ້ານການຄ້າ. 3. ບໍລິສັດປະກອບເອງ
ໄລຍະກໍ່ສ້າງທີ 2 ປີ 2027-2028	25.000,0	ກໍ່ສ້າງພື້ນຖານໂຄງລ່າງດ້ານການຄ້າ, ສິ່ງອຳນວຍຄວາມສະດວກຢູ່ເຂດອ້ອມຂ້າງ ແລະ ໂຄສະນາຍີ່ຫໍ້.	ລະດົມທຶນ (Private placement) ບໍລິສັດປະກອບເອງ

ໄລຍະກໍ່ສ້າງທີ 3 ປີ 2028 - 2029	5.000,0	ກະກຽມເຂົ້າຕະຫຼາດ ແລະ ຂະຫຍາຍຕະຫຼາດ	ບໍລິສັດປະກອບເອງ

2. ລາຍການທີ່ສາມາດສ້າງລາຍຮັບ

ປີ້ຜ່ານປະຕູ	ປີ້ຜ່ານປະຕູ 5 ໂດລາ	ປີທີ 1 ໄດ້ກວມ 20% ຂອງລາຍຮັບທັງໝົດ
	ປີ້ VIP (ເຂົ້າຊານ + ຖ້ຳ) 30-50 ໂດລາ	ປີທີ 5 ໄດ້ກວມ 50% ຂອງລາຍຮັບທັງໝົດ
	ຈຸດຊົມວິວ 5-10 ໂດລາ	
ຜະລິດຕະພັນ ການທ່ອງທ່ຽວ ອາຫານການກິນ	ສາຍແຂນ/ເຄື່ອງຫອມ/ຂອງຄ້ຳຄູນ/ຂອງທີ່ລະນຶກດ້ານ ການທ່ອງທ່ຽວ ດ້ານວັດທະນະທຳ ແລະອື່ນໆ	ປີທີ 1 ໄດ້ກວມ 35% ຂອງລາຍຮັບທັງໝົດ
	ຮ້ານອາຫານແຄມຂອງ ສະເລ່ຍ 6-20 ໂດລາ	ປີທີ 5 ໄດ້ກວມ 35% ຂອງລາຍຮັບທັງໝົດ
ກິດຈະກຳວັດທະນະທຳ	ຫຼັກສູດເຂົ້າຊານ 30-50 ໂດລາ/ມື້	ປີທີ 1 ໄດ້ກວມ 10% ຂອງລາຍຮັບທັງໝົດ
	ບັນລະຍາຍວັດທະນະທຳສາສະໜາພຸດ 20-50 ໂດລາ/ຄົນ	ປີທີ 5 ໄດ້ກວມ 15% ຂອງລາຍຮັບທັງໝົດ
	ງານຊຸມນຸມສາສະໜາພຸດ 100-1000 ໂດລາ/ເທື່ອ	
ການບໍລິການລະດັບສູງ	ເຮືອນພັກເຂົ້າຊານແຄມຂອງ 80-200 ໂດລາ/ຄືນ	ປີທີ 1 ໄດ້ກວມ 35% ຂອງລາຍຮັບທັງໝົດ
	ຂາຍ/ເຊົ່າຮ້ານຄ້າ	ປີທີ 5 ໄດ້ກວມ 40% ຂອງລາຍຮັບທັງໝົດ
	ລ່ອງເຮືອນ້ຳຊອງເພື່ອເຂົ້າປະຕິບັດທຳ	

3. ການຄາດຄະເນຜົນກຳໄລ (ພັນໂດລາ):

ລາຍການ	ປີ 2026 E	ປີ 2027 E	ປີ 2028 E	ລວມ	ໝາຍເຫດ
I. ລາຍຮັບຈາກດຳເນີນທຸລະກິດ	**0,0**	**11.423,0**	**28.928,0**	**40.351,2**	ລາຍຮັບຫຼັງອາກອນ
ໃນນັ້ນ: ປີ້ຜ່ານປະຕູ		1.242,0	2.087,0	3.329,0	
ຜະລິດຕະພັນ/ອາຫານການກິນ		5.173,0	10.725,0	15.898,0	
ກິດຈະກຳວັດທະນະທຳ		2.621,0	5.391,0	8.012,0	
ການບໍລິການລະດັບສູງ		2.387,0	10.725,0	13.112,0	
II. ຕົ້ນທຶນການດຳເນີນທຸລະກິດລວມ	**303,0**	**7.278,0**	**18.854,0**	**26.435,0**	
ໃນນັ້ນ: ຕົ້ນທຶນການດຳເນີນທຸລະກິດ		6.249,0	13.667,0	19.916,0	
ອາກອນ				0,0	
ຄ່າໃຊ້ຈ່າຍບໍລິຫານ	86,0	266,0	1.048,0	1.400,0	
ຄ່າໃຊ້ຈ່າຍການຂາຍ	217,0	717,0	3,493,0	4.427,0	
ຄ່າໃຊ້ຈ່າຍການເງິນ		46,0	646,0	692,0	
III. ກຳໄລ	**-303,0**	**4145,0**	**10.074,0**	**13.916,0**	
ລົບ: ອາກອນລາຍຮັບ		829,0	2.014,8	2.843,8	
IV. ກຳໄລສຸດທິ	**-303,0**	**3.316,0**	**8.059,2**	**11.072,2**	

(3) ໂຄງການຜະລິດ ແລະ ປຸງແຕ່ງຜະລິດຕະພັນທ່ອງທ່ຽວ

1. ການກຳນົດຍຸດທະສາດ

ອີງໃສ່ຊັບພະຍາກອນກາເຟທີ່ມີຄຸນນະພາບສູງຂອງລາວ, ຍົກສູງມູນຄ່າເພີ່ມຂອງຜະລິດຕະພັນໂດຍຜ່ານຍຸດທະສາດການສ້າງຍີ່ຫໍ້, ພ້ອມດຽວກັນນັ້ນກໍ່ໃຊ້ນະໂຍບາຍການຍົກເວັ້ນພາສີອາກອນຂອງ RCEP ແລະ

ນະໂຍບາຍເງິນອຸດໜູນຊາຍແດນແຂວງຢູນນານ ເພື່ອຫຼຸດຄ່າຂົນສົ່ງລົງ 28%, ຈັດວາງລະບົບຕ່ອງໂສ້ອຸດສາຫະກຳແບບ " ວັດຖຸດິບອາຊຽນ + ການປຸງແຕ່ງຢູ່ຈີນ + ຕະຫຼາດທົ່ວໂລກ ".

ໂຮງງານປຸງແຕ່ງກາເຟຊົ່ງວັ່ງວຽງ ນຳໃຊ້ຮູບແບບ " ຂັບເຄື່ອນສອງເສັ້ນທາງ " ເພື່ອສ້າງຄວາມສົມດຸນລະຫວ່າງຜົນປະໂຫຍດໄລຍະສັ້ນ ແລະ ມູນຄ່າຍີ່ຫໍ້ໄລຍະຍາວ:

ການສ້າງຍີ່ຫໍ້ລະດັບສູງ: ຜະລິດກາເຟ 3in1 300 ໂຕນ/ປີ, ມີການຢັ້ງຢືນອິນຊີ, ຄຸນນະພາບສູງ ແລະ ລາຄາສູງ, ເປົ້າໝາຍແມ່ນຕະຫຼາດຈີນ ແລະ ຊ່ອງທາງຂາຍຍ່ອຍລະດັບສູງ.

ການສົ່ງອອກວັດຖຸດິບ: ຜະລິດເມັດກາເຟຄຸນນະພາບດີ/ຜົງກາເຟ 200 ໂຕນ/ປີ, ນຳໃຊ້ນະໂຍບາຍການຍົກເວັ້ນພາສີອາກອນຂອງ RCEP, ສຸມໃສ່ຕະຫຼາດຈີນ, ອາຊີຕາເວັນອອກສຽງໃຕ້ ແລະ ເອີຣົບ.

2. ແຜນການລົງທຶນ

ການລົງທຶນທັງໝົດຂອງໂຄງການ: 700,00 ພັນໂດລາສະຫະລັດ.

ໄລຍະເກັບຄືນການລົງທຶນ: 3,2 ປີ, IRR ລວມ: 58%.

ໄລຍະເວລາ	ເນື້ອໃນ	ຈຳນວນເງິນ (ພັນໂດລາ)	ຜົນຄາດໝາຍໄວ້
ໄລຍະທີ 1	ລະບົບປະສົມ+ສາຍການຫຸ້ມຫໍ່ພື້ນຖານ	20,0	2026 Q2
ໄລຍະທີ 2	ລະບົບເພີ່ມຫຼາຍລົດຊາດ+ຫ້ອງທົດລອງຍີ່ຫໍ້	25,0	2026 Q1
ໄລຍະທີ 3	ສາຍການຜະລິດກາເຟແຊ່ແຂງ (ສ່ວນໜຶ່ງຮັບເໝົາ)	14,0	2026 Q3
ເງິນໝຸນວຽນ	ສະສົມສັດຖຸດິບ+ຄ່າທຳນຽມຮັບຮອງ	11,0	ນຳເຂົ້າເປັນໄລຍະ
ລວມ		70,0	

3. ການຄາດຄະເນຜົນກຳໄລ (ພັນໂດລາ):

ລາຍການ	ປີ 2026 E	ປີ 2027 E	ປີ 2028 E	ລວມ	ໝາຍເຫດ
I. ລາຍຮັບລວມ	**1.690,1**	**3.098,6**	**4.929,6**	**9.718,3**	ລາຍຮັບຫຼັງອາກອນ
ໃນນັ້ນ: ຜະລິດຕະພັນຍີ່ຫໍ້	1.014,1	2.169,0	3.943,7	7.126,8	
ການສົ່ງອອກວັດຖຸດິບ	676,1	929,6	985,9	2.591,5	
II. ຕົ້ນທຶນລວມ	**1.524,3**	**2.621,3**	**3.825,6**	**7.971,1**	
ໃນນັ້ນ: ຕົ້ນທຶນການດຳເນີນທຸລະກິດ	1.211,3	2.042,3	3.098,6	6.352,1	
ອາກອນ				0,0	
ຄ່າໃຊ້ຈ່າຍບໍລິຫານ	86,0	216.0	248,0	550,0	
ຄ່າໃຊ້ຈ່າຍການຂາຍ	217,0	317,0	393,0	927,0	
ຄ່າໃຊ້ຈ່າຍການເງິນ	10,0	46,0	86,0	142,0	
III. ກຳໄລ	**165,9**	**477,3**	**1.104,0**	**1.747,2**	
ລົບ: ອາກອນລາຍຮັບ	33,2	95,5	220,8	349,4	
IV. ກຳໄລສຸດທິ	**132,7**	**381,9**	**883,2**	**1.397,8**	

(4) ໂຄງການກໍ່ສ້າງຕະຫຼາດຈຳໜ່າຍເຄື່ອງອາໄຫລ່ກົນຈັກກະສິກຳ

1. ການຄາດຄະເນການລົງທຶນ (ພັນໂດລາ):

ລາຍການ	ເນື້ອທີ່ຂາຍ	ຫົວໜ່ວຍ	ຕົ້ນທຶນທີ່ດິນຫົວໜ່ວຍ	ຕົ້ນທຶນກໍ່ສ້າງຫົວໜ່ວຍ	ຕົ້ນທຶນລວມ	ຕົ້ນທຶນທັງໝົດ	ໝາຍເຫດ
ຮ້ານຄ້າ	4.900	m2	0,167	0,350	0,517	2.531,8	

ຄອນໂດ	27.200	m2	0,167	0,350	0,517	14.054,2	
ລວມ	32.100				1,033	16.586,1	

2. ການຄາດຄະເນລາຍຮັບ (ພັນໂດລາ):

ລາຍການ	ເນື້ອທີ່/m^2	ລາຄາຂາຍຫົວໜ່ວຍ	ລາຍຮັບລວມ
ຮ້ານຄ້າ	4.900	1,0	4.900,0
ຄອນໂດ	27.200	0,8	21.760,0
ລວມ	32.100		26.660,0

3. ການຄາດຄະເນຜົນກຳໄລ (ພັນໂດລາ):

ລາຍການ	ປີ 2026 E （15%）	ປີ 2027 E （55%）	ປີ 2028 E （30%）	ລວມ	ມາຍເຫດ
I. ລາຍຮັບລວມ		**3.999,0**	**14.663,0**	**18.662,0**	ອາກອນມູນຄ່າເພີ່ມ 10%
II. ຕົ້ນທຶນລວມ	**133,0**	**3.066,9**	**10.826,4**	**14.026,3**	
ໃນນັ້ນ: ຕົ້ນທຶນດຳເນີນທຸລະກິດ		2.488,0	9.122,0	11.610,0	
ອາກອນດຳເນີນທຸລະກິດ		80,0	293,3	373,2	ຄາດວ່າອາກອນໂອນກຳມະສິດທີ່ດິນ 2%
ຄ່າໃຊ້ຈ່າຍບໍລິຫານ	127,0	140,0	467,0	607,0	
ຄ່າໃຊ້ຈ່າຍການຂາຍ		293,0	821,1	1.114,1	
ຄ່າໃຊ້ຈ່າຍການເງິນ	6,0	66,0	123,0	189,0	
III. ກຳໄລ	**-133,0**	**932,1**	**3.836,6**	**4.635,7**	
ລົບ: ອາກອນລາຍໄດ້	0,0	186,4	767,3	953,7	
IV. ກຳໄລສຸດທິ	**-133,0**	**745,6**	**3.069,3**	**4,385,0**	

(5) ໂຄງການທາງດ້ານບໍ່ແຮ່

1. ການຄາດຄະເນການລົງທຶນ (ພັນໂດລາ):

ປີ	ເງິນລົງທຶນ	ເນື້ອໃນ	ແຫຼ່ງທຶນ
2026	10.000,00	ວຽກງານກະກຽມເບື້ອງຕົ້ນກ່ອນຂຸດຄົ້ນ	ຄູ່ຮ່ວມມືອອກທຶນກ່ອນ
2027	20.000,00	ຂະຫຍາຍຂະໜາດການຂຸດຄົ້ນ ແລະ ປັບປຸງເຄື່ອງອຸປະກອນ	ຄູ່ຮ່ວມມືອອກທຶນກ່ອນ
2028	12.000,00	ປັບປຸງຂັ້ນຕອນການຂຸດຄົ້ນ ແລະ ປົກຄອງບໍລິຫານສິ່ງແວດລ້ອມ	ບໍລິສັດປະກອບເອງ

2. ການຄາດຄະເນລາຍຮັບ ແລະ ຜົນກຳໄລ (ພັນໂດລາ):

ລາຍການ	ປີ 2026 E	ປີ 2027 E	ປີ 2028 E	ລວມ	ໝາຍເຫດ
I. ລາຍຮັບລວມ		**21.000,0**	**38.000,0**	**58.000,0**	ອາກອນມູນຄ່າເພີ່ມ 10%
II. ຕົ້ນທຶນລວມ	**141,5**	**10.251,0**	**16.783,0**	**27.175,0**	
ໃນນັ້ນ: ຕົ້ນທຶນດຳເນີນທຸລະກິດ		6.780,0	10.550,0	17.330,0	
ອາກອນດຳເນີນທຸລະກິດ		255,0	410,0	665,0	
ຄ່າໃຊ້ຈ່າຍບໍລິຫານ	120,0	1.050,0	1.900,0	2.950,0	
ຄ່າໃຊ້ຈ່າຍການຂາຍ	15,5	2.100,0	3.800,0	5.900,0	
ຄ່າໃຊ້ຈ່າຍການເງິນ	6,0	66,0	123,0	189,0	
III. ກຳໄລ	**-141,5**	**10.749,0**	**21.217,0**	**31.824,0**	
ລົບ: ອາກອນລາຍຮັບ	0,0	2.140,0	4.243,4	6.393,0	
IV. ກຳໄລສຸດທິ	**-141,5**	**8.599,2**	**16.973,6**	**4.385,0**	

VI. ການຄາດຄະເນຜົນການດຳເນີນທຸລະກິດຂອງກຸ່ມບໍລິສັດ ທ່ອງທ່ຽວ ອັດທະນະທຳລາວ ມະຫາຊົນ

ການຄາດຄະເນລາຍຮັບ, ອາກອນ ແລະ ກຳໄລຂອງບໍລິສັດໃນສາມປີຂ້າງໜ້າຄືດັ່ງນີ້ (ພັນໂດລາ):

ໂຄງການ	ລາຍການ	ປີ 2026 E	ປີ 2027 E	ປີ 2028 E	ໝາຍເຫດ
ອາຄານອັດທະນະທຳ ທ່ອງທ່ຽວ	I. ລາຍຮັບການດຳເນີນທຸລະກິດລວມ	6.720,4	8.640,5	3.840,2	
	II. ຕົ້ນທຶນການດຳເນີນທຸລະກິດລວມ	3.255,0	3.265,5	3.030,2	
	III. ກຳໄລການດຳເນີນທຸລະກິດ	3.465,4	5.375,0	810,0	
	ລົບ: ອາກອນລາຍຮັບ	422,1	1.075,0	162,0	
	IV. ກຳໄລສຸດທິ	3.043,3	4.300,0	648,0	
ເຂດທ່ອງທ່ຽວພູຜາບິ້ ເມືອງວັງວຽງ	I. ລາຍຮັບການດຳເນີນທຸລະກິດລວມ	0,0	11.423,0	28.928,0	
	II. ຕົ້ນທຶນການດຳເນີນທຸລະກິດລວມ	303,0	7.278,0	18.854,0	
	III. ກຳໄລການດຳເນີນທຸລະກິດ	-303,0	4.145,0	10.074,0	
	ລົບ: ອາກອນລາຍຮັບ		829,0	2.014,8	
	IV. ກຳໄລສຸດທິ	-303,0	3.316,0	8.059,0	
ການຜະລິດຜະລິດຕະ ພັນກາເຟ	I. ລາຍຮັບການດຳເນີນທຸລະກິດລວມ	1.690,0	3.098,6	4.929,6	
	II. ຕົ້ນທຶນການດຳເນີນທຸລະກິດລວມ	1.524,3	2.621,3	3.825,6	
	III. ກຳໄລການດຳເນີນທຸລະກິດ	165,9	477,0	1.104,0	
	ລົບ: ອາກອນລາຍຮັບ	33,2	95,0	220,8	
	IV. ກຳໄລສຸດທິ	132,7	381,9	883,0	
ຕະຫຼາດຈຳໜ່າຍເຄື່ອງ ອາໄຫລ່ກົນຈັກກະສິກຳ	I. ລາຍຮັບການດຳເນີນທຸລະກິດລວມ	0,0	3.999,0	14.663,0	
	II. ຕົ້ນທຶນການດຳເນີນທຸລະກິດລວມ	133,0	3.066,9	10.826,4	
	III. ກຳໄລການດຳເນີນທຸລະກິດ	-133,0	931,1	3.836,6	
	ລົບ: ອາກອນລາຍຮັບ	0,0	186,4	767,3	
	IV. ກຳໄລສຸດທິ	-133,0	745,6	3.069,3	
ບໍ່ແຮ່	I. ລາຍຮັບການດຳເນີນທຸລະກິດລວມ	0,0	21.000,0	38.000,0	
	II. ຕົ້ນທຶນການດຳເນີນທຸລະກິດລວມ	141,5	10.251,0	16.783,0	

	III. ກຳໄລການດຳເນີນທຸລະກິດ	-141,5	10.749,0	21.217,0	
	ລົບ: ອາກອນລາຍຮັບ	0,0	2.149,8	4.242,4	
	IV. ກຳໄລສຸດທິ	-141,5	8.599,2	16.973,6	
ລວມ	I. ລາຍຮັບການດຳເນີນທຸລະກິດລວມ	8.410,0	48.161,1	90.360,8	ລາຍຮັບຫຼັງອາກອນ
	II. ຕົ້ນທຶນການດຳເນີນທຸລະກິດລວມ	5.356,8	26.482,7	53.319,2	
	III. ກຳໄລການດຳເນີນທຸລະກິດ	3.053,8	21.678,4	37.041,2	
	ລົບ: ອາກອນລາຍຮັບ	455,8	4.335,7	7.408,3	ອາກອນ 20%
	IV. ກຳໄລສຸດທິ	2.598,5	17.342,7	29.633,3	

VII. ສະຫຼຸບ

ອີກ 3 ປີຂ້າງໜ້າ ບໍລິສັດຈະສຸມໃສ່ໂຄງການອາຄານອັດທະນະທຳ ທ່ອງທ່ຽວ, ຕະຫຼາດຈຳໜ່າຍເຄື່ອງອາໄຫລ່ກົນຈັກກະສິກຳ, ເຂດທ່ອງທ່ຽວພູຜາບິ້ງ ເມືອງວັງວຽງ, ການພັດທະນາບໍ່ແຮ່ ແລະ ການຜະລິດກາເຟແຕ່ລະໂຄງການລ້ວນແຕ່ມີຄວາມຕ້ອງການການຕະຫຼາດ ແລະ ກຳລັງປິ່ມຊ້ອນການສ້າງກຳໄລ. ຜ່ານການວາງແຜນ ແລະ ດຳເນີນງານແບບວິທະຍາສາດ ໂຄງການອາຄານອັດທະນະທຳ ທ່ອງທ່ຽວ ຈະສ້າງຜົນກຳໄລຢ່າງໃຫຍ່ຫຼວງໂດຍອາໄສທ່າແຮງດ້ານທີ່ຕັ້ງ ແລະ ຄຸນນະພາບ, ໂຄງການຕະຫຼາດຈຳໜ່າຍເຄື່ອງອາໄຫລ່ກົນຈັກກະສິກຳ ແລະ ພັດ ທະນາບໍ່ແຮ່ ຈະຄ່ອຍໆຍົກລະດັບຄວາມສາມາດການຜະລິດ ແລະ ສ້າງກຳໄລເປັນເທື່ອລະກ້າວ, ໂຄງການຜະລິດກາເຟເຖິງແມ່ນວ່າການລົງທຶນເບື້ອງຕົ້ນມີຈຳນວນຫຼວງຫຼາຍ ແຕ່ມີຊ່ອງຫວ່າງພັດທະນາຢ່າງກວ້າງຂວາງເປັນໄລຍະຍາວ, ໂຄງການພະພຸດທະຮູບພູຜາບ໊ວ ຈະສ້າງຈຸດເພີ່ມຂຶ້ນເສດຖະກິດໄລຍະຍາວດ້ານອັດທະນະທຳ ແລະ ທ່ອງທ່ຽວ ໃຫ້ແກ່ບໍລິສັດ.

ເຖິງແມ່ນວ່າບາງໂຄງການໄດ້ປະເຊີນໜ້າກັບສິ່ງທ້າທາຍ ເຊັ່ນ: ການລົງທຶນເບື້ອງຕົ້ນສູງ ສະພາບການຕະຫຼາດ ບໍ່ໝັ້ນຄົງ ແລະສິ່ງທ້າທາຍອື່ນໆອີກ ແຕ່ບໍລິສັດໄດ້ສ້າງກົນໄກທີ່ສົມເຫດສົມຜົນ ເພື່ອຮັບມືກັບຄວາມສ່ຽງ, ຜ່ານການວິເຄາະການຕະຫຼາດ ແລະ ການຄາດຄະເນການເງິນ. ຄຽງຄູ່ກັບການພັດທະນາຕາມລຳດັບຂອງແຕ່ລະໂຄງການ ລາຍຮັບຈາກການດຳເນີນທຸລະກິດ ແລະ ກຳໄລສຸດທິຂອງບໍລິສັດ ຈະເພີ່ມຂຶ້ນຢ່າງໝັ້ນທ່ຽງ ຊັບສິນຂອງບໍລິສັດຈະສືບຕໍ່ຂະຫຍາຍໃຫຍ່ຂຶ້ນ ແລະ ກຳລັງການແຂ່ງຂັນກໍຈະນັບມື້ນັບຍົກສູງຂຶ້ນ, ບໍ່ພຽງແຕ່ຈະໃຫ້ຕອບແທນແກ່ຜູ້ຖືຮຸ້ນຈຳນວນຫຼວງຫຼາຍ ແຕ່ຍັງເປັນການສະໜັບສະໜູນຕໍ່ການພັດທະນາ ແລະ ຍົກລະດັບຂອງຂະແໜງການອັດທະນະທຳ ທ່ອງທ່ຽວ ແລະ ຂະແໜງການທີ່ກ່ຽວຂ້ອງ ໃຫ້ບັນລຸຜົນປະໂຫຍດທາງດ້ານເສດຖະກິດ ແລະ ຜົນປະໂຫຍດທາງດ້ານສັງຄົມ.

ແຜນດັ່ງກ່າວໄດ້ຜ່ານການພິຈາລະນາ ແລະ ຮັບຮອງຢູ່ກອງປະຊຸມສະພາບໍລິຫານສາມັນ ສະໄໝທີ 10 ປີ 2025 ຂອງ ກຸ່ມບໍລິສັດ ທ່ອງທ່ຽວ ອັດທະນະທຳລາວ ມະຫາຊົນ.

ດັ່ງນັ້ນ, ຈຶ່ງສະເໜີຕໍ່ກອງປະຊຸມ ເພື່ອພິຈາລະນາ ແລະ ຮັບຮອງ.

ຜູ້ລາຍງານ : ທ່ານ ຈ່າງຈິນຫົວ

ເອກະສານຕິດຄັດ : 04

ການແຕ່ງຕັ້ງ
ຜູ້ອຳນວຍການໃຫຍ່ຂອງບໍລິສັດ ບທອລ

ຮຽນ :ບັນດາຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າຜູ້ຖືຮຸ້ນ ທີ່ນັບຖື

ຂ້າພະເຈົ້າຂໍຖືເປັນກຽດສະເໜີກ່ຽວກັບການປ່ຽນຜູ້ອຳນວຍການໃຫຍ່ຂອງບໍລິສັດຕໍ່ກອງປະຊຸມ ເຊິ່ງມີລາຍລະອຽດດັ່ງນີ້:

1. ອີງຕາມຄວາມຕ້ອງການຂອງການດຳເນີນທຸລະກິດ ແລະ ການພັດທະນາຂອງບໍລິສັດ ທ່ານ ຕິ່ງ ຢູ້ຕິ່ງຈະຍົກຍ້າຍຄືນກັບປະເທດຈີນ ແລະ ບໍ່ສາມາດສືບຕໍ່ດຳລົງຕຳແໜ່ງເປັນຜູ້ອຳນວຍການໃຫຍ່ຂອງບໍລິສັດໄດ້, ສະນັ້ນ, ຈະຍົກເລີກ ທ່ານ ຕິ່ງ ຢູ້ຕິ່ງ ເປັນຜູ້ອຳນວຍການໃຫຍ່ຂອງບໍລິສັດ

2. ຮັບຈ້າງທ່ານ ຫຼີ ຮ້າວ ເປັນຜູ້ອຳນວຍການໃຫຍ່ຜູ້ໃໝ່ຂອງບໍລິສັດ.

ຂໍ້ສະເໜີດັ່ງກ່າວໄດ້ຜ່ານການພິຈາລະນາ ແລະ ຮັບຮອງຢູ່ກອງປະຊຸມສະພາບໍລິຫານສາມັນ ສະໄໝທີ 10 ປີ 2025 ຂອງ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ.

ດັ່ງນັ້ນ, ຈຶ່ງສະເໜີຕໍ່ກອງປະຊຸມ ເພື່ອໃຫ້ພິຈາລະນາ ແລະ ຮັບຮອງ.

ຜູ້ລາຍ : ທ່ານ ເນ້ຍເຫຼີຍ

ຊີ່ອະປະຫວັດ 简历

ຊື່ ແລະ ນາມສະກຸນ: ຫຼີວຮ້າວ 姓名：刘浩	
ວັນເກີດ: 01/12/1977 出生年月：01/12/1977	
ຮຽນຈົບທີ່: ວິທະຍາຄານທະຫານບົກ ຄຸນມິ 毕业院校：昆明陆军学院	
ປະສົບການເຮັດວຽກ: 任职情况：	
ປີ 1996 - 1998 ຜູ້ແປພາສາ ບໍລິສັດ ອຸດສາຫະກຳຂາເຂົ້າ-ຂາອອກ ຢຸນຫຼີ ຈຳກັດ 1999 年至 2006 年 云岭工业进出口公司 翻译	
ປີ 2006 - ປີ 2012 ຫົວໜ້າໂຄງການ ບໍລິສັດ ເຕັກໂນໂລຊີ ເຊີ້ນຊິນສີໄຕ້ ຈຳກັດ 2006 年至 2012 年 云南振兴时代科技有限公司 项目经理	
ປີ 2012 - 2017 ຮອງຜູ້ອຳນວຍການໃຫຍ່ ບໍລິສັດ ເຕັກໂນໂລຊີ ສີຫາຍ ຢຸນນານ ຈຳກັດ 2012 年至 2017 年 云南济海科技有限公司 副总经理	
ປີ 2017 - 2021 ຮອງຜູ້ອ□ານວຍການໃຫຍ່ ບໍລິສັດ ການລົງທຶນ ຈູເຈີ້ງອາຍອີໄອຈີ (ລາວ) ຈຳກັດ ຜູ້ດຽວ 2017 年至 2021 云南能投居正投资（老挝）有限公司 副总经理	
ປີ 2001 - 2025 ຜູ້ອຳນວຍການໃຫຍ່ ບໍລິສັດ ໂທລະພາບດີຈີຕອນລາວ ຈຳກັດ 2021 年 2025 老挝数字电视有限公司 总经理	

ເອກະສານຕິດຄັດ 5 :

ການປ່ຽນສະມາຊິກສະພາບໍລິຫານຂອງບໍລິສັດ

ຮຽນ : ບັນດາຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າຜູ້ຖືຮຸ້ນ ທີ່ນັບຖື

ຂ້າພະເຈົ້າຂໍຖືເປັນກຽດສະເໜີກ່ຽວກັບການປ່ຽນຜູ້ອຳນວຍການໃຫຍ່ຂອງບໍລິສັດຕໍ່ກອງປະຊຸມ ເຊິ່ງມີລາຍລະອຽດດັ່ງນີ້:

1. ອີງຕາມຄວາມຕ້ອງການຂອງການດຳເນີນທຸລະກິດ ແລະ ການພັດທະນາຂອງບໍລິສັດ ຈະຍົກເລີກທ່ານ ຫວັງ ຮຸ່ຍ ເປັນກຳມະການສະພາບໍລິຫານຂອງບໍລິສັດ ແລະ ຈະແຕ່ງຕັ້ງ ທ່ານ ຫຼືອ ຮ້າວ ເປັນກຳມະການສະພາບໍລິຫານຂອງບໍລິສັດ.

2. ຈະຍົກເລີກທ່ານ ຕີ່ງ ຢູ້ຕົ່ງ ເປັນກຳມະການສະພາບໍລິຫານຂອງບໍລິສັດ ແລະ ຈະແຕ່ງຕັ້ງ ທ່ານ ຕີ່ງ ເຈີ້ນຊູ້ ເປັນກຳມະການສະພາບໍລິຫານຜູ້ໃໝ່ຂອງບໍລິສັດ.

3. ຈະຍົກເລີກທ່ານ ຫຼືອ ຮ້າວ ເປັນກຳມະການສະພາບໍລິຫານອິດສະລະຂອງບໍລິສັດ ແລະ ຈະແຕ່ງຕັ້ງທ່ານ ຫຼືອ ເຫວີນຈູ້ ເປັນກຳມະການສະພາບໍລິຫານອິດສະລະຜູ້ໃຫຍ່ຂອງບໍລິສັດ.

ຂໍ້ສະເໜີດັ່ງກ່າວໄດ້ຜ່ານການພິຈາລະນາ ແລະ ຮັບຮອງຢູ່ກອງປະຊຸມສະພາບໍລິຫານສາມັນ ສະໄໝທີ 10 ປີ 2025 ຂອງ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ.

ດັ່ງນັ້ນ, ຈຶ່ງສະເໜີຕໍ່ກອງປະຊຸມ ເພື່ອພິຈາລະນາ ແລະ ຮັບຮອງ.

ຜູ້ລາຍ : ທ່ານ ເນ້ຍເຫຼີຍ

ເອກະສານຕິດຄັດ : 6

ໃບມອບສິດ

1.ຂ້າພະເຈົ້າ.....ສັນຊາດ.....

ບັດປະຈຳຕົວ/ບັດສະປໍເລກທີ..... ID card/passport NO:.....

ເຮືອນເລກທີ່.....ບ້ານ.....ເມືອງ.....ແຂວງ.....

ເປັນຜູ້ຖືຮຸ້ນຂອງ ບໍລິສັດຊິມັ່ງລາວ ມະຫາຊົນ
ມີຮຸ້ນທີ່ຖືຈຳນວນ.....ຮຸ້ນຊຶ່ງເທົ່າກັບຈຳນວນສຽງທີ່ຈະລົງຄະແນນສຽງ

2.ຂໍມອບໝາຍ ທ່ານ/ທ່ານນາງ.....ບັດປະຈຳຕົວ/ບັດສະປໍເລກທີ.....

ເຮືອນເລກທີ່.....ບ້ານ.....ເມືອງ.....ແຂວງ.....

ໃຫ້ເປັນຜູ້ຕາງໜ້າຂອງຂ້າພະເຈົ້າ ເພື່ອເຂົ້າຮ່ວມ ແລະ ລົງຄະແນນສຽງແທນຂ້າພະ ເຈົ້າຢູ່ໃນກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1 ປະຈຳປີ 2025 ຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົ,ທີ່ຈະຈັດຂຶ້ນໃນວັນທີ 23 ທັນວາ 2025 ຢູ່ຫ້ອງປະຊຸມໃຫ່ຍ ຊັ້ນ 4 ບໍລິສັດ ລັດວິສາຫະກິດ ພັດທະນາກະສິກຳ - ອຸດສາຫະກຳ ບໍລິການແລະ ການຄ້າ ຂາອອກ - ຂາເຂົ້າ ນະຄອນຫຼວງວຽງຈັນ.

3. ຂ້າພະເຈົ້າ ອະນຸຍາດໃຫ້ຜູ້ຕາງໜ້າລົງຄະແນນສຽງແທນຂ້າພະເຈົ້າ ຢູ່ໃນກອງປະຊຸມດັ່ງນີ້(ເລືອກເອົາໜຶ່ງ ຈາກ ສອງທາງເລືອກລຸ່ມນີ້)

1. □ ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງຄະແນນສຽງໃນທຸກໆບັນຫາແທນຂ້າພະເຈົ້າ ຕາມທີ່ຜູ້ກ່ຽວສົມຄວນ;ຫຼື
2. □ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າດັ່ງນີ້ (ຖ້າເລືອກຂໍ້ນີ້, ກະລຸນາເລືອກລົງ ຄະແນນເຫັນດີ ຫຼື ບໍ່ເຫັນດີ ໃນທຸກໆວາລະລຸ່ມນີ້):

ວາລະທີ 1: ພິຈາລະນາ ແລະຮັບຮອງການສະເໜີສືບຕໍ່ຮັກສາສະຖານະການເປັນບໍລິສັດຈົດທະບຽນ.

□ເຫັນດີ/approve □ບໍ່ເຫັນດີ/disapprove

ວາລະທີ 2: ພິຈາລະນາ ແລະຮັບຮອງແຜນການດຳເນີນທຸລະກິດຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳ ລາວ ມະຫາຊົນ ປີ 2026 - 2028.

□ເຫັນດີ/approve □ບໍ່ເຫັນດີ/disapprove

ວາລະທີ 3 : ພິຈາລະນາ ແລະຮັບຮອງການປ່ຽນຜູ້ອຳນວຍການໃຫ່ຍຂອງບໍລິສັດ.

□ເຫັນດີ/approve □ບໍ່ເຫັນດີ/disapprove

ວາລະທີ 4 : ພິຈາລະນາ ແລະຮັບຮອງ ການປ່ຽນສະມາຊິກສະພາບໍລິຫານຂອງບໍລິສັດ.

□ເຫັນດີ/approve □ບໍ່ເຫັນດີ/disapprove

3. ການລົງຄະແນນສຽງຂອງຜູ້ຕາງໜ້າທີ່ບໍ່ເປັນໄປຕາມໃບມອບສິດນີ້ ໃຫ້ຖືວ່າບໍ່ຖືກຕ້ອງ ແລະບໍ່ແມ່ນການລົງຄະ
ແນນຂອງຂ້າພະເຈົ້າ.

4.ໃນກໍລະນີທີ່ຂ້າພະເຈົ້າ ບໍ່ໄດ້ລະບຸຄວາມຕ້ອງການຂອງຕົນໃນການລົງຄະແນນສຽງໃນວາລະໃດໜຶ່ງ ຫຼື ລະບຸໄວ້
ບໍ

ຈະແຈ້ງ ໃຫ້ຖືວ່າຂ້າພະເຈົ້າລົງຄະແນນສຽງເຫັນດີ.

5. ທຸກການກະທຳໃດຂອງຜູ້ຕາງໜ້າໃນກອງປະຊຸມ ທີ່ເປັນໄປຕາມໃບມອບສິດນີ້ ໃຫ້ຖືວ່າຂ້າພະເຈົ້າ ໄດ້ກະທຳ
ເອງ


ທຸກປະການ.


ທີ່.....ວັນທີ...../.....2025

ເຊັນຜູ້ຖືຮຸ້ນທີ່ມອບໝາຍ

ເຊັນຜູ້ຕາງໜ້າ

ແຜນທີບໍລິສັດ ລັດວິສາຫະກິດ ພັດທະນາກະສິກຳ-ອຸດສາຫະກຳ ບໍລິການແລະ ການຄ້າ ຂາອອກ-ຂາເຂົ້າ





ໝາຍເຫດ:

- ເອກະສານທັງໝົດນີ້ໃຫ້ຖືເອົາສະບັບພາສາລາວເປັນຫຼັກ